ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

08-15
ສິງຫາ
2024
ປີທີ 13
ສະບັບທີ 981
ລາຍສັປະດາ

## ສນຊ ປະເມີນຜົນການປະຕິບັດລັດຖະທຳມະນູນ



(ສພຊ) - ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະ9ປີຜ່ານມາໃນຂອບເຂດທົ່ວປະເທດ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນສະບັບປີ 2015 ໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ. ວັນທີ 29 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມ ສູນກາງແນວລາວສ້າງຊາດ (ສນຊ) ຈຶ່ງໄດ້ຈັດກອງປະຊຸມ ປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ2015 ໂດຍການເປັນປະທານຮ່ວມຂອງທ່ານ ປອ. ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ແລະ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ທັງເປັນຫົວໜ້າ

ອ່ານຕໍ່ໜ້າ 4




## ຮອງປະທານສະພາແຫ່ງຊາດ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຢູ່ເຂດເລືອກຕັ້ງທີ 13



(ສພຊ) - ວັນທີ 27 ກໍລະກົດຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງສອງຄອນ ໄດ້ເຄື່ອນໄຫວ ແລະ ຢ້ຽມຢາມກຸ່ມບ້ານທີ 01 ເຂດເທສະບານ ແລະ ກຸ່ມບ້ານນາກະລາ ເມືອງສອງຄອນ ໂດຍການຕ້ອນຮັບຂອງທ່ານ ພັອ. ລຳພູນ ວໍລະວົງ ເລຂາພັກເມືອງ, ເຈົ້າເມືອງສອງຄອນ ແລະທ່ານ ຄຳດີ ສຸວັນນະສານ ປະທານຄະ

ອ່ານຕໍ່ໜ້າ 5

## ປອ. ນາງ ສູນທອນ ໄຊຍະຈັກ ຕ້ອນຮັບປະທານສະພາຜູ້ແທນປະຊາຊົນນະຄອນຫຼວງອູລານບາຕໍ



(ສພຊ) - ວັນທີ 31 ກໍລະກົດຜ່ານມາທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຈ. ບັດບາຢາສ໌ກາລັງ (Batbayasgalan Jantsan) ປະທານສະພາຜູ້ແທນປະຊາຊົນນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ລະຫວ່າງວັນທີ 28 ກໍລະກົດ - 3 ສິງຫາ 2024.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະຄັ້ງນີ້ ເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ

ອ່ານຕໍ່ໜ້າ 5

## ປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ເຊກອງ




ອ່ານຕໍ່ໜ້າ 5

## ຈຳປາສັກ ປະເມີນຜົນການປະຕິບັດລັດຖະທຳມະນູນ



(ສພຊ) - ເພື່ອສະຫຼຸບຕີລາຄາການປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາຢູ່ແຂວງຈຳປາສັກ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນ ໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງໄດ້. ວັນທີ 24 ກໍລະກົດ 2024 ທີ່ຫ້ອງປະຊຸມສະໂມສອນຫຼັກ 4 ແຂວງຈຳປາສັກ ຈຶ່ງໄດ້ຈັດກອງປະຊຸມປະເມີນຜົນການປະຕິ

ອ່ານຕໍ່ໜ້າ 8

## ຮຽບຮຽງເນື້ອໃນກົດໝາຍການສະກັດກັ້ນ ແລະ ຕ້ານອັກຄີໄພ



(ສພຊ) - ເພື່ອຮັບປະກັນໃຫ້ບັນດາຮ່າງກົດໝາຍທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ມີເນື້ອໃນຄົບຖ້ວນ ແລະ ຮັດກຸມ, ກຳມາທິການກົດໝາຍ ຈຶ່ງໄດ້ສົມທົບ ກັບບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ຈັດກອງປະຊຸມຮຽບຮຽງເນື້ອໃນບັນດາຮ່າງກົດໝາຍ ເຊິ່ງໃນວັນທີ 1 ສິງຫານີ້ ໄດ້ຈັດກອງປະຊຸມຮຽບ

ອ່ານຕໍ່ໜ້າ 12


ເສດຖະສາດແນວພຸດ (ໜ້າ 9)


ຄະນະກຳມະການເລືອກຕັ້ງ... (ໜ້າ 11)



ບຸດຜ່ອນຄວາມທຸກຍາກ... (ໜ້າ 12)

ຊົມເຊີຍວັນສື່ມວນຊົນແຫ່ງຊາດ ແລະ ການພິມຈຳໜ່າຍ ຄົບຮອບ 74 ປີ (13 ສິງຫາ 1950 - 13 ສິງຫາ 2024) ຢ່າງສຸດໃຈ!

# ປະເມີນຜົນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ສະຫວັນນະເຂດ




(ສພຊ) - ວັນທີ 23 ກໍລະກົດ2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ມີກອງປະຊຸມປະເມີນຜົນການປະຕິບັດລັດຖະທຳມະນູນສະບັບປັບປຸງປີ2015 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີເຈົ້າແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນແຂວງ, ການນຳຂອງແຂວງ, ອົງການ, ຂະແໜງການແລະບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງ 15ເມືອງທົ່ວແຂວງສະຫວັນນະເຂດ ພ້ອມດ້ວຍອະດີດການນຳ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມມີຈຸດປະສົງສະຫຼຸບຕີລາຄາການປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາໃນຂອບເຂດທົ່ວປະເທດ ກໍຄືແຂວງສະຫວັນນະເຂດໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງໄດ້.

ທ່ານຮອງປະທານສະພາແຫ່ງຊາດໄດ້ເນັ້ນໜັກວ່າ: ເພື່ອເຮັດໃຫ້ການປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ແຂວງສະຫວັນນະເຂດ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງແຂວງ, ສະເໜີໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການປະຕິບັດລັດຖະທຳມະນູນ ໂດຍຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການ, ຂະແໜງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ ຕິດພັນກັບການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າ. ພ້ອມກັນນີ້, ກໍໃຫ້ມີຄຳຄິດຄຳເຫັນຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍສະເພາະການປັບປຸງໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ໝວດວ່າດ້ວຍອົງການປົກຄອງທ້ອງຖິ່ນ; ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດສະຫຼຸບການປະຕິບັດລັດຖະທຳມະນູນ ສະບັບປັບປຸງປີ 2015 ສະເໜີໂດຍທ່ານ ກອງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ຫຼັງຈາກນັ້ນ, ໄດ້ມີການປະກອບຄຳເຫັນຈາກບັນດາຕາງໜ້າກຸ່ມວຽກງານຂົງເຂດອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແລະອົງການຈັດຕັ້ງມະຫາຊົນ; ຂົງເຂດສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກພາງ 02; ຂົງເຂດອົງການປົກຄອງແຂວງ; ກຸ່ມເສດຖະກິດ, ຜູ້ປະກອບການ, ວິສາຫະກິດ ແລະ ທະນາຄານ; ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ບັນດາອົງການປົກຄອງນະຄອນ-ເມືອງທັງ 15 ເມືອງ-ນະຄອນໃນແຂວງສະຫວັນນະເຂດ.

ສັງລວມແລ້ວ, ຜ່ານການຈັດຕັ້ງກອງປະຊຸມປະເມີນການປະຕິບັດລັດຖະທຳມະນູນ ສະບັບປັບປຸງປີ 2015 ເຫັນວ່າບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບໃນການປະກອບຄຳເຫັນຕໍ່ບັນດາຂໍ້ເຈາະຈົ້ມຂອງຄະນະປັບປຸງລັດຖະທຳມະນູນລະດັບຊາດ ໂດຍໄດ້ເຫັນດີເປັນເອກະພາບກ່ຽວກັບຄວາມຈຳເປັນ ແລະ ຄວາມສຳຄັນໃນການປັບປຸງລັດຖະທຳມະນູນ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງສະພາບການແຫ່ງການພັດທະນາຂອງປະເທດເຮົາໃນໄລຍະໃໝ່, ໂດຍຍົກໃຫ້ເຫັນຄວາມຈຳເປັນໃນການປັບປຸງບາງມາດຕາໃນລະບົບການເມືອງ, ບາງມາດຕາວ່າດ້ວຍການປົກຄອງຂັ້ນທ້ອງຖິ່ນ ແລະ ສະພາປະຊາຊົນຂັ້ນທ້ອງຖິ່ນ ແລະ ໄດ້ມີຂໍ້ສະເໜີຈຳນວນໜຶ່ງທີ່ມີຜົນປະໂຫຍດໃຫ້ແກ່ການສືບຕໍ່ປັບປຸງລັດຖະທຳມະນູນສະບັບປີ2015ເພື່ອກ້າວໄປເຖິງການພິຈາລະນາຮັບຮອງເອົາໃນປີ 2025 ທີ່ຈະມາເຖິງ.

ກ່ອນໜ້ານີ້ໜຶ່ງວັນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມເມືອງຊົນນະບູລີ ແລະ ໄດ້ມອບເຄື່ອງນຸ່ງຫົ່ມ ແລະ ອຸປະກອນການສຶກສາ ລວມມູນຄ່າ 20 ລ້ານກວ່າກີບ ໃຫ້ແກ່ຄະນະພັກເມືອງ ເພື່ອນຳໄປມອບຕໍ່ໃຫ້ປະຊາຊົນໃນພື້ນທີ່ກຸ່ມບ້ານຄຳປ່າແຫນ, ຄະນະຍັງໄດ້ໄປຢ້ຽມຢາມເຂດພັດທະນາຂອງເມືອງຕື່ມອີກຈຳນວນໜຶ່ງ.

**(ນາງ ອາລິນ ສຸພົມມະປະດິດ)**




# ແຂວງວຽງຈັນ ປະເມີນຜົນການປະຕິບັດລັດຖະທຳມະນູນ ສະບັບປີ 2015




(ສພຊ) - ວັນທີ 30 ກໍລະກົດຜ່ານມາ ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໄດ້ມີກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີເຈົ້າແຂວງວຽງຈັນ, ປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແລະ ສະມາຊິກສະພາປະຊາຊົນແຂວງ, ການນຳຂອງແຂວງ ແລະ ເຈົ້າເມືອງ-ຮອງເຈົ້າເມືອງທົ່ວແຂວງ ເຂົ້າຮ່ວມຢ່າງພ້ອມພຽງ. ຈຸດປະສົງແມ່ນເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໃນໄລຍະ 9 ປີຜ່ານມາ ຢູ່ແຂວງວຽງຈັນ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າປັບປຸງເນື້ອໃນຂອງລັດຖະທຳມະນູນໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ກ່າວວ່າ: ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ແຂວງວຽງຈັນ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງແຂວງ, ຂໍໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ, ອົງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະກົດໝາຍ ຕິດພັນກັບການສ້າງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ. ພ້ອມກັນນີ້, ກໍໃຫ້ສະເໜີຄຳຄິດຄຳເຫັນຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍສະເພາະໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ອົງການປົກຄອງທ້ອງຖິ່ນ; ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດຢູ່ແຂວງວຽງຈັນ.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຈາກທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ, ຄະນະອະນຸກຳມະການເນື້ອໃນຂອງຄລຊເຊິ່ງທ່ານໃຫ້ຮູ້ວ່າ: ການປັບປຸງລັດຖະທຳມະນູນຄັ້ງນີ້ແມ່ນເພື່ອສືບຕໍ່ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຢ່າງຮອບດ້ານມີຫຼັກການຂອງພັກ ເປັນຂໍ້ບັນຍັດຂອງລັດຖະທຳມະນູນສະບັບໃໝ່ ເປັນຕົ້ນມະຕິຄະນະບໍລິຫານງານສູນກາງພັກ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນການນຳພາຂອງພັກ; ມະຕິກົມການເມືອງສູນກາງພັກ ກ່ຽວກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່; ປັບປຸງບາງບົດບັນຍັດກ່ຽວກັບລະບົບອົງການອຳນາດແຫ່ງລັດຂັ້ນຕ່າງໆ ເປັນຕົ້ນອົງການບໍລິຫານລັດຂັ້ນທ້ອງຖິ່ນ ໃຫ້ມີຄວາມສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະລັດ ໃນໄລຍະໃໝ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍຢ່າງມີປະສິດທິພາບ, ປະສິດທິຜົນສູງຂຶ້ນ, ຮັບປະກັນການປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂຶ້ນສູ່ຈຸດໝາຍສັງຄົມນິຍົມ; ລັດຖະທຳມະນູນສະບັບໃໝ່ນີ້ ຕ້ອງສອດຄ່ອງກັບເນື້ອໃນພື້ນຖານຂອງໂຄງການການເມືອງຂອງພັກ ແລະ ມະຕິຕ່າງໆຂອງບັນດາກອງປະຊຸມໃຫຍ່ຂອງພັກເຮົາໃນຕໍ່ໜ້າ; ເປັນບ່ອນອີງພື້ນຖານໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍໃນຕໍ່ໜ້າ ໃຫ້ເປັນລະບົບຄົບຊຸດ, ສອດຄ່ອງ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດໄດ້; ສູ້ຊົນປັບປຸງລັດ ຖະທຳມະນູນສະບັບໃໝ່ ໃຫ້ສຳເລັດກາງປີ 2025 ແລະ ສາມາດນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດຊຸດທີ IX.

ຈາກນັ້ນ, ໄດ້ຮັບຟັງການປະກອບຄຳເຫັນຈາກຕາງໜ້າກຸ່ມຂົງເຂດສະພາປະຊາຊົນ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ; ອົງການປົກຄອງ; ຜູ້ປະກອບການ ແລະ ວິສາຫະກິດ; ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ການຈັດຕັ້ງພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ ແລະ ບັນດາເຈົ້າເມືອງພາຍໃນແຂວງວຽງຈັນ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮຽບຮຽງເນື້ອໃນກົດໝາຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ




(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ24-25 ກໍລະກົດຜ່ານມາ ທີ່ທ່າລາດ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ແລະ ທ່ານ ດຣ. ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ; ມີບັນດາທ່ານຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຕາງໜ້າຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານບຸນຕາເທບພະວົງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ພວກເຮົາຈະໄດ້ພ້ອມກັນຄົ້ນຄວ້າ ແລະ ຮຽບຮຽງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງວັນທີ 24 ມິຖຸນາ 2024 ຈຳນວນ 16 ທ່ານ ກວມເອົາ 24 ມາດຕາ ເຊິ່ງຄະນະຮັບຜິດຊອບຮ່າງກົດໝາຍດັ່ງກ່າວ ໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ປັບປຸງ 8 ມາດຕາ ແລະ ຮັກສາໄວ້ 16 ມາດຕາ ແລະ ໃນວັນທີ 28 ມິຖຸນາ2024 ກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ພິຈາລະນາຮັບຮອງເອົາດ້ວຍຄະແນນສຽງເຫັນດີ 140 ທ່ານ ເທົ່າກັບ 98.59%; ກອງປະຊຸມຄັ້ງນີ້ ຈະຄົ້ນຄວ້າຄືນບັນດາຄຳເຫັນຂອງ ສສຊ ເພື່ອເລືອກເຟັ້ນປັບປຸງໃສ່ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອດ້ານງົບປະມານຈາກມູນນິທິອາຊີ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ຫົວພັນ




(ສພຊ) - ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ2015 ຢູ່ແຂວງຫົວພັນ ໄດ້ຈັດຂຶ້ນໃນວັນທີ 29 ກໍລະກົດນີ້ ທີ່ຫ້ອງປະຊຸມພະແນກແຜນການ ແລະ ການລົງທຶນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ, ກຳມະການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ແລະ ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ກຳມະການ ຄລຊ; ມີຮອງເຈົ້າແຂວງ, ປະທານສະພາປະຊາຊົນແຂວງ, ຄະນະຮັບຜິດຊອບປັບປຸງລັດຖະທຳມະນູນຈາກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ເຈົ້າເມືອງ/ຮອງເຈົ້າເມືອງ, ຫົວໜ້າ/ຮອງຫົວໜ້າພະແນກການ-ອົງການທຽບເທົ່າພະແນກການ, ອະດີດການນຳຂອງແຂວງ ຕະຫຼອດຮອດແຂກຖືກເຊີນ ເຂົ້າຮ່ວມ 120 ທ່ານ ຍິງ 27 ທ່ານ.

ຈຸດປະສົງກໍເພື່ອຕີລາຄາການໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມລັດຖະທຳມະນູນ ຕິດພັນກັບການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນຢູ່ທົ່ວແຂວງຫົວພັນ; ການຜັນຂະຫຍາຍລັດຖະທຳມະນູນເປັນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໃຫ້ເຫັນໄດ້ຜົນສຳເລັດ, ດ້ານດີ, ດ້ານອ່ອນ ແລະ ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ, ບົດຮຽນຢູ່ແຂວງຫົວພັນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນວ່າ: ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ແຂວງຫົວພັນ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງທ້ອງຖິ່ນ, ສະເໜີໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ໂດຍຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ, ອົງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈ ທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ, ການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າຢູ່ແຂວງຫົວພັນ. ພ້ອມກັນນີ້, ກໍໃຫ້ສະເໜີຄຳຄິດຄຳເຫັນຕໍ່ການປັບປຸງລັດຖະທຳມະນູນ ໂດຍສະເພາະການປັບປຸງເນື້ອໃນໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ ແລະຂັ້ນບ້ານ; ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດຢູ່ແຂວງຫົວພັນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ຈາກທ່ານ ຄຳແພງ ວິລະພັນ ຄະນະອະນຸກຳມະການເນື້ອໃນຂອງ ຄລຊ; ບົດສັງລວມຫຍໍ້ການປະເມີນລັດຖະທຳມະນູນ ສະບັບປີ 2015 ທົ່ວແຂວງຈາກຕາງໜ້າຂົງເຂດສະພາປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ; ບົດລາຍງານການຄົ້ນຄວ້າຈາກຂົງເຂດອົງການປົກຄອງແຂວງ ແລະ ການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ; ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະບັນດາຂົງເຂດອົງການປົກຄອງເມືອງພາຍໃນແຂວງຫົວພັນ.

ຈາກນັ້ນ, ຕົວແທນຈາກພາກສ່ວນຕ່າງໆ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ປະກອບຄຳເຫັນຢ່າງກົງໄປກົງມາ ລວມທັງຂໍ້ສະເໜີຕ່າງໆຕໍ່ກັບການປັບປຸງເນື້ອໃນລັດຖະທຳມະນູນ.

**(ນາງ ກົງໃຈ ແສງອຳພັນ)**

# ສຳມະນາການປະຕິບັດຄຳແນະນຳຂອງ ASEAN RAI



(ສພຊ) - ໃນລະຫວ່າງວັນທີ24-25 ກໍລະກົດ 2024, ທ່ານ ປອ. ສຸລາພອນ ອິນທະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ທ່ານ ອຸດົມ ວົງໄກສອນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາຮ່ວມຄັ້ງທີ 2 ລະຫວ່າງອົງການອາຫານ ແລະ ກະສິກຳ (FAO), ກອງເລຂາໄອປາ ແລະ ສະຖາບັນການພັດທະນາແບບຍືນຍົງສາກົນ (IISD) ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳຂອງອາຊຽນສຳລັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້ (ASEAN RAI) ທີ່ບາຫຼີ, ປະເທດອິນໂດເນເຊຍ. ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ມີຄະນະຜູ້ແທນຈາກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ເຊັ່ນ: ອິນໂດເນເຊຍ, ຫວຽດນາມ, ກຳປູເຈຍ, ມາເລເຊຍ, ຟີລິບປິນ; ນອກນັ້ນ, ຍັງມີຄະນະຜູ້ແທນຈາກລັດຖະສະພາ ຕີມໍ ເລັດສະເຕ, ກອງເລຂາໄອປາ, ກອງເລຂາອາຊຽນ ແລະ ບັນດາອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມມື ASEAN RAI. ບັນດາຄະນະຜູ້ແທນທີ່ເຂົ້າຮ່ວມ ໄດ້ພ້ອມກັນທົບທວນຄືນ, ສົນທະນາແລະປຶກສາຫາລືກັນຢ່າງກົງໄປກົງມາ ແລະ ສ້າງສັນ ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳຂອງອາຊຽນ ສຳລັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້.

ທ່ານ ປອ. ສຸລາພອນ ອິນທະວົງ ໄດ້ຕາງໜ້າໃຫ້ແກ່ຄະນະຜູ້ແທນສະພາແຫ່ງຊາດລາວລາຍງານ ແລະ ປະກອບຄຳເຫັນຕໍ່ຫົວຂໍ້: “ການເພີ່ມທະວີການຮ່ວມມືໃນພາກພື້ນ: ຊຸກຍູ້ວຽກງານການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຄຳແນະນຳຂອງອາຊຽນສຳລັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້ ຢ່າງມີປະສິດຜົນ” ເຊິ່ງຍົກໃຫ້ເຫັນເຖິງຄວາມພະຍາຍາມ ແລະ ເອົາໃຈໃສ່ ຂອງ ສປປ ລາວ ໃນການປັບປຸງ ແລະ ພັດ ທະນານິຕິກຳ ໂດຍໄດ້ມີຂະບວນການທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງ ເປັນຕົ້ນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍຊົນລະປະທານ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍອາຫານ, ກົດໝາຍວ່າດ້ວຍທີ່ດິນ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງກັບຄຳແນະນຳຂອງASEANRAI. ພ້ອມກັນນັ້ນ, ທ່ານຍັງໄດ້ຍົກໃຫ້ເຫັນຄວາມສຳຄັນ ແລະ ປະກອບຄຳຄິດຄຳເຫັນບາງຈຸດຕໍ່ກອງປະຊຸມຄື: 1) ການສ້າງຄວາມເຂັ້ມແຂງລົງເລິກວິຊາການສະເພາະດ້ານ ໂດຍຜ່ານການເຝິກອົບຮົມ, ສຳມະນາວິຊາການ, ກອງປະຊຸມແລກປ່ຽນວິຊາການ, ແລກປ່ຽນ ແລະ ຖອດຖອນບົດຮຽນ ໃຫ້ແກ່ສະພາແຫ່ງຊາດ ແລະ ກະຊວງກ່ຽວຂ້ອງ ໃຫ້ມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ ແລະ ເປັນເອກະພາບກັບຄວາມສຳຄັນຂອງຄຳແນະນຳຂອງ ASEAN RAI; 2) ເພີ່ມທະວີການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ໂດຍແມ່ນສະພາແຫ່ງຊາດ ເປັນເຈົ້າການເຜີຍແຜ່ໃຫ້ແກ່ທຸກພາກສ່ວນກ່ຽວຂ້ອງ ເຂົ້າໃຈ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຄຳແນະນຳຂອງ ASEAN RAI ພ້ອມທັງຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດ ແລະ ການປະເມີນຜົນເປັນແຕ່ລະໄລຍະ;3)ເພີ່ມທະວີໃນການແບ່ງປັນ ແລະ ແລກປ່ຽນບົດຮຽນ, ປະສົບການ ແລະ ຂໍ້ມູນຂ່າວສານ ກັບບັນດາສະມາຊິກລັດຖະສະພາປະເທດອາຊຽນ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາອື່ນທີ່ກ່ຽວຂ້ອງ ແລະ4) ເພີ່ມທະວີໃນການຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືສາກົນ ທາງດ້ານທຶນຮອນ ແລະເຕັກນິກວິຊາການ ເພື່ອສະໜັບສະໜູນການເຄື່ອນໄຫວການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ພ້ອມທັງວິຊາການຊ່ວຍວຽກຂອງສະພາແຫ່ງຊາດ ລວມທັງການຊຸກຍູ້ສົ່ງເສີມ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳແນະນຳຂອງ ASEAN RAI ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ນອກຈາກນີ້, ກອງປະຊຸມຍັງໄດ້ປັບປຸງບັນດາກິດຈະກຳ, ເນື້ອໃນ ຂອງຮ່າງແຜນດຳເນີນງານຂອງລັດຖະສະພາ ຕໍ່ການຈັດຕັ້ງປະຕິບັດຄຳແນະນຳຂອງ ASEAN RAI ພ້ອມທັງປະກອບຄຳເຫັນຕໍ່ຊື່ຫົວຂໍ້ຂອງແຜນດຳເນີນງານດັ່ງກ່າວໃຫ້ມີຄວາມເປັນເອກະພາບ ເພື່ອນຳສະເໜີພິຈາລະນາຮັບຮອງຢູ່ກອງປະຊຸມວຽກງານດ້ານເສດຖະກິດ ໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດຂຶ້ນໃນເດືອນຕຸລານີ້.

# ຄະນະມິດຕະພາບລັດຖະສະພາ ລາວ-ໄທ ຢ້ຽມຢາມ ແລະ ເຮັດວຽກຢູ່ລາຊະອານາຈັກໄທ



(ສພຊ)-ຕອບສະໜອງຕາມການເຊື້ອເຊີນຂອງປະທານກຸ່ມມິດຕະພາບສະມາຊິກລັດຖະສະພາ ໄທ-ລາວ, ທ່ານ ສຸບັນ ສະວະບຸດປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ໄທ ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ລາຊະອານາຈັກໄທ ລະຫວ່າງວັນທີ 24-27 ກໍລະກົດ 2024 ເພື່ອສືບຕໍ່ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລາວ-ໄທ ກໍຄືລະຫວ່າງສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຈະເລີນງອກງາມຂຶ້ນ.

ທີ່ສຳນັກງານລັດຖະສະພາໄທ ໄດ້ມີການພົບປະລະຫວ່າງທ່ານ ສຸບັນ ສະວະບຸດ ກັບທ່ານ ນິຄົມ ບຸນວິເສດ ສະມາຊິກສະພາຜູ້ແທນລາສະດອນ, ຮອງປະທານກຸ່ມມິດຕະພາບສະມາຊິກລັດຖະສະພາ ໄທ-ລາວ ພ້ອມດ້ວຍຄະນະຂອງສອງຝ່າຍ. ໃນການພົບປະ, ຮອງປະທານກຸ່ມມິດຕະພາບສະມາຊິກລັດຖະສະພາ ໄທ-ລາວ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ເປັນກັນເອງ ຕໍ່ຄະນະຜູ້ແທນສະພາແຫ່ງຊາດລາວ; ພ້ອມກັນນີ້, ສອງຝ່າຍຮ່ວມກັນຕີລາຄາຄືນສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງຕະຫຼອດມາ ຈົນໄດ້ຍົກລະດັບການພົວພັນຂຶ້ນເປັນຄູ່ຮ່ວມຍຸດທະສາດ ເພື່ອຄວາມຈະເລີນເຕີບໂຕແລະການພັດທະນາແບບຍືນຍົງ, ມີການແລກປ່ຽນການຢ້ຽມຢາມລະຫວ່າງການນຳຂັ້ນສູງຂອງສອງປະເທດຢ່າງປົກກະຕິ, ມີການຮ່ວມມືທາງດ້ານເສດຖະກິດ, ການຄ້າ-ການລົງທຶນ, ພະລັງງານ, ການພັດທະນາຊັບພະຍາກອນມະນຸດ, ສາທາລະນະສຸກ, ການທ່ອງທ່ຽວ, ການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະການເຊື່ອມຕໍ່ດ້ວຍການສ້າງຂົວຂ້າມແມ່ນ້ຳຂອງຫຼາຍແຫ່ງ ແລະການພັດທະນາເສັ້ນທາງຄົມມະນາຄົມທາງບົກ ຈາກຝັ່ງໄທມາສູ່ຝັ່ງລາວ ເພື່ອເຊື່ອມຕໍ່ໃສ່ເສັ້ນທາງລົດໄຟ ລາວ-ຈີນ ອັນເປັນທ່າແຮງສຳຄັນໃນການຮ່ວມມືລະຫວ່າງສອງປະເທດ; ນອກນີ້, ຍັງໄດ້ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນການຮັບມືກັບໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການພົວພັນຮ່ວມມືໃນເວທີພາກພື້ນ ແລະ ສາກົນ.

ສອງຝ່າຍຍັງໄດ້ຮ່ວມກັນທົບທວນຄືນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ ລາວ-ໄທ, ໄທ-ລາວ ໃນໄລຍະຜ່ານມາເຊິ່ງເຫັນວ່າໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ໂດຍສະແດງອອກມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນລະດັບສູງ, ກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາແລະຂັ້ນຕ່າງໆ; ມີການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ, ການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພິເສດ ສອງຝ່າຍໄດ້ຕີລາຄາການຮ່ວມມືລະຫວ່າງສອງຄະນະມິດຕະພາບ ລາວ-ໄທ, ໄທ-ລາວ ຜ່ານມາ, ນອກຈາກການຢ້ຽມຢາມ ແລະແລກປ່ຽນຂໍ້ມູນຂ່າວສານແລ້ວ ຍັງມີການຮ່ວມມືກັນເພື່ອສົ່ງເສີມວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຊິ່ງຜ່ານມາຄະນະມິດຕະພາບ ໄທ-ລາວ ໄດ້ນຳເອົາອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ ແລະ ຄອມພິວເຕີ ພ້ອມດ້ວຍເງິນສົດຈຳນວນໜຶ່ງ ມາມອບໃຫ້ໂຮງຮຽນສາມັນຊົນເຜົ່າແຂວງວຽງຈັນ ແລະ ອື່ນໆ.

ພາຍຫຼັງການພົບປະສອງຝ່າຍ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປະດິພັດ ສັນຕິພາດາ ຮອງປະທານລັດຖະສະພາ ແຫ່ງລາຊະອານາຈັກໄທ ເຊິ່ງດຳເນີນໄປດ້ວຍບັນຍາກາດອັນອົບອຸ່ນຖານບ້ານໃກ້ເຮືອນຄຽງ. ທ່ານປະທານຄະນະມິດຕະພາບລັດຖະສະພາ ລາວ-ໄທ ໄດ້ສະແດງຄວາມຂອບໃຈທີ່ທ່ານຮອງປະທານລັດຖະສະພາໄທ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບຜົນການພົບປະກັບກຸ່ມມິດຕະພາບສະມາຊິກລັດຖະສະພາ ໄທ-ລາວ ເຊິ່ງສອງຝ່າຍພ້ອມກັນຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາໃນໄລຍະຜ່ານມາ, ປຶກສາຫາລືທິດທາງການຮ່ວມມືໃນຕໍ່ໜ້າ ເພື່ອຊຸກຍູ້ໃຫ້ແກ່ການພົວພັນຮ່ວມມືລະຫວ່າງສອງລັດຖະບານ ເປັນຕົ້ນການຮ່ວມມືດ້ານເສດຖະກິດ-ສັງຄົມ, ພະລັງງານ, ແຮງງານ, ການພັດທະນາຊັບພະຍາກອນມະນຸດ, ການທ່ອງທ່ຽວແລະອື່ນໆ.

ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະ ແລະ ເຮັດວຽກຮ່ວມກັບຄະນະກຳມະການການເລືອກຕັ້ງ ແຫ່ງລາຊະອານາຈັກໄທ ເພື່ອປຶກສາຫາລື, ແລກປ່ຽນບົດຮຽນ ແລະປະສົບການໃນການເລືອກຕັ້ງເພື່ອເປັນຂໍ້ມູນໃຫ້ແກ່ສະພາແຫ່ງຊາດລາວ ທີ່ຈະມີການເລືອກຕັ້ງໃນປີ 2026; ພົບປະກັບທ່ານ ນັດຖະໄຊ ນຳພູນສຸກສັນ ຜູ້ວ່າລາຊະການຈັງຫວັດເພັດຊະບູລີ ໃນໂອກາດທີ່ໄປຢ້ຽມຢາມ ແລະ ເຮັດວຽກຢູ່ຈັງຫວັດດັ່ງກ່າວ.

ນອກຈາກການພົບປະເຮັດວຽກທາງການແລ້ວ, ຄະນະຍັງໄດ້ຢ້ຽມຊົມໂຄງການ ຊ່າງຫົວມັນ ຕາມພະລາຊະດຳລິ, ໂຄງການສຶກສາວິໄຈ ແລະ ພັດທະນາສິ່ງແວດລ້ອມ ແຫຼມຜັກເບ້ຍ ຕາມພະລາຊະດຳລິ ແລະ ຢ້ຽມຢາມພື້ນຖານເສດຖະກິດ ແລະ ທ່ອງທ່ຽວຈຳນວນໜຶ່ງ ຂອງຈັງຫວັດເພັດຊະບູລີ ແລະ ຈັງຫວັດປະຈວບຄີລີຂັນ.

**(ກຳມາທິການການຕ່າງປະເທດ)**

# ຍົກລະດັບຄວາມຮູ້ ແລະ ທັກສະພາສາ ໃຫ້ກອງເລຂາ ແລະ ພະນັກງານຮັບໃຊ້ AIPA-45



(ສພຊ) - ກອງປະຊຸມສຳມະນາພາສາອັງກິດໃຫ້ແກ່ພະນັກງານລັດຖະກອນໃນການກະກຽມເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 23 ກໍລະກົດ 2024 ທີ່ສະພາແຫ່ງຊາດ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ເຂັມພອນ ອາໂນໄທ ຫົວໜ້າກົມພົວພັນລັດຖະສະພາຫຼາຍຝ່າຍ, ກຳມາທິການການຕ່າງປະເທດ ແລະ ທ່ານ ເປຄຳ ລໍຄຳສອນ ຮອງຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະ ນິຕິກຳ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໂດຍມີວິທະຍາກອນ ທ່ານ ຈອນຄຣິດສ໌ໂຕເຟີ (John Christopher) ອະດີດຜູ້ອຳນວຍການພັດທະນາຂີດຄວາມສາມາດຈາກສູນລັດຖະສະພາອາຊີ; ເຂົ້າຮ່ວມມີຄະນະກົມ, ຄະນະພະແນກ ພ້ອມດ້ວຍລັດຖະກອນວິຊາການຈາກກອງເລຂາຊ່ວຍວຽກຄະນະຮັບຜິດຊອບເນື້ອໃນຕ່າງໆ. ທັງນີ້ກໍເພື່ອຍົກລະດັບຄວາມຮູ້ແລະທັກສະທາງດ້ານພາສາອັງກິດໃຫ້ແກ່ກອງເລຂາ ແລະ ພະນັກງານຮັບໃຊ້ກອງປະຊຸມໄອປາຄັ້ງນີ້ ໃຫ້ສາມາດນຳໃຊ້ຢ່າງຄ່ອງແຄ້ວ, ການຂຽນເອກະສານເນື້ອໃນຕ່າງໆຂອງກອງປະຊຸມ ແລະ ການປະສານງານ ເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ.

ທ່ານ ເຂັມພອນ ອາໂນໄທ ໄດ້ກ່າວເປີດກອງປະຊຸມວ່າ: ໃນເດືອນຕຸລາທີ່ຈະມາເຖິງນີ້ ສປປ ລາວ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາ ໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45; ສະນັ້ນ, ການກະກຽມຄວາມພ້ອມດ້ານຕ່າງໆແມ່ນມີຄວາມສຳຄັນທີ່ສຸດ ບໍ່ວ່າຈະເປັນຄວາມພ້ອມທາງດ້ານເນື້ອໃນ, ວຽກງານ ປກຊ-ປກສ ແລະ ວຽກງານພິທີການຕ່າງໆ ສິ່ງສຳຄັນທີ່ສຸດ ຄືການນຳໃຊ້ພາສາອັງກິດໃນການເປັນປະທານກອງປະຊຸມ, ການຮ່າງເນື້ອໃນ ແລະການສື່ສານຕ່າງໆ. ດັ່ງນັ້ນ, ທາງກຳມາທິການການຕ່າງປະເທດ ຈຶ່ງໄດ້ຈັດກອງປະຊຸມສຳມະນາພາສາອັງກິດ ໂດຍເນັ້ນໃສ່ 4 ວິຊາຕົ້ນຕໍ ຄື: 1) ພື້ນຖານ ແລະ ທັກສະເບື້ອງຕົ້ນ, 2) ທັກສະການຮຽນຂັ້ນສູງ ແລະ ການເຝິກປະຕິບັດຕົວຈິງ, 3) ຍົກສູງຄວາມຊຳນິຊຳນານໃນການສື່ສານ, 4) ການສະເໜີໂຄງການ ແລະ ການທົບທວນຄືນ ເຊິ່ງຜູ້ເຂົ້າຮ່ວມໃນນີ້ ລ້ວນແຕ່ແມ່ນຜູ້ທີ່ເຮັດວຽກຕົວຈິງເປັນເສນາທິການໃຫ້ແກ່ການນຳໃນການເປັນປະທານກອງປະຊຸມ, ກະກຽມເນື້ອໃນກອງປະຊຸມໄອປາ ແລະ ກອງປະຊຸມປີ່ນອ້ອມຕ່າງໆ ໂດຍໄດ້ຄັດເລືອກຈາກແຕ່ລະອະນຸກຳມະການຊ່ວຍວຽກຕ່າງໆ. ທ່ານຍັງໄດ້ເນັ້ນຕື່ມວ່າ ການຮຽນຄັ້ງນີ້ ຈະເປັນໂອກາດທີ່ດີໃຫ້ແກ່ບັນດາທ່ານໄດ້ສຶກສາຮ່ຳຮຽນ, ຍົກລະດັບພາສາອັງກິດຂອງຕົນຢູ່ໃນລະດັບທີ່ດີທີ່ສຸດເພື່ອນຳໃຊ້ເຂົ້າໃນການກະກຽມຄວາມພ້ອມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ນີ້; ພ້ອມທັງຈະເຮັດໃຫ້ບັນດາທ່ານມີຄວາມຮູ້ທັກສະໃນຫຼາຍຮູບການເຊັ່ນ: ການສື່ສານ, ການຄົ້ນຄວ້າຊອກຫາຄຳສັບທາງການ, ການສະເໜີບົດ, ເຕັກນິກການເຈລະຈາທາງການທູດ ແລະ ພາກປະຕິບັດຕົວຈິງອື່ນໆເປັນຕົ້ນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ ແກ່ສະພາແຫ່ງຊາດ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ສນຊ...

(ຕໍ່ຈາກໜ້າ 1)

ກອງເລຂາຂອງ ຄລຊ; ມີບັນດາທ່ານຮອງປະທານ, ກຳມະການ, ທີ່ປຶກສາ ແລະຄູ່ຮ່ວມງານ ສນຊ, ຜູ້ຕາງໜ້າອົງການພາຄີແລະພະນັກງານ ສນຊ ພ້ອມດ້ວຍແນວລາວສ້າງຊາດນະຄອນຫຼວງວຽງຈັນ, ແນວລາວສ້າງຊາດເມືອງ 9 ເມືອງທົ່ວນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 100 ທ່ານ.

ທ່ານ ປອ. ສິນລະວົງ ຄຸດໄພທູນ ໄດ້ກ່າວວ່າ: ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ສູນກາງແນວລາວສ້າງຊາດ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງ, ຂໍໃຫ້ບັນດາທ່ານຈົ່ງລົງເລິກຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນ ຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບອົງການແນວໂຮມ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈ ທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ, ການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ຜູ້ຊົງຄຸນວຸດທິປັນຍາຊົນ, ນັກທຸລະກິດແລະປະຊາຊົນບັນດາເຜົ່າຢູ່ຂົງເຂດແນວລາວສ້າງຊາດ. ພ້ອມກັນນີ້, ກໍໃຫ້ມີຄຳຄິດຄຳເຫັນຕໍ່ການປັບປຸງລັດຖະທຳມະນູນ ໂດຍສະເພາະການປັບປຸງເນື້ອໃນກ່ຽວກັບການປະຕິບັດສິດ ແລະພັນທະຂອງພົນລະເມືອງລາວ, ສາສະໜາ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດຢູ່ຂົງເຂດແນວລາວສ້າງຊາດ, ດີແທ້ໃຫ້ເບິ່ງກວມລວມໄປເຖິງພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ເພາະແນວທາງຂອງພັກໄດ້ກຳນົດໄວ້ວ່າ ເຂົາເຈົ້າເປັນສ່ວນໜຶ່ງຂອງວົງຄະນາຍາດແຫ່ງຊາດລາວ ທີ່ຕັດແຍກອອກຈາກກັນບໍ່ໄດ້.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດສະຫຼຸບປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ2015, ການປະກອບຄຳເຫັນຂອງຕົວແທນຈາກພາກສ່ວນຕ່າງໆ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້, ລວມທັງຂໍ້ສະເໜີຕ່າງໆຕໍ່ກັບການປັບປຸງເນື້ອໃນຂອງລັດຖະທຳມະນູນ.

**(ສອນສັກ ວັນວິໄຊ)**

# ປິດກອງປະຊຸມສະໄໝສາມັນເທື່ອທີ 7 ສພຂ ສະຫວັນນະເຂດ ຊຸດທີ II




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ດຳເນີນມາເປັນເວລາ 3 ວັນ ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນວັນທີ 26 ກໍລະກົດນີ້ ທີ່ຫໍວັດທະນະທຳໄກສອນພົມວິຫານ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໆສະຫວັນນະເຂດ, ບັນດາທ່ານ ສສຊປະຈຳເຂດເລືອກຕັ້ງທີ13 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ), ບັນດາທ່ານ ການນຳຂອງແຂວງ, ຕາງໜ້າອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບປະຈຳພາກກາງ 2, ເຈົ້ານະຄອນໄກສອນ ພົມວິຫານ, ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການ, ອະດີດ ສສຊ ປະຈຳເຂດເລືອກຕັ້ງທີ 13 ຊຸດທີ VIII ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນໃນແຕ່ລະບັນຫາຢ່າງເລິກເຊິ່ງຂອງບັນດາທ່ານ ສສຊ ແລະ ສສຂ, ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງ ອອກເປັນມະຕິດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2024;

2. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2024;

3. ຜົນການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການ ປີ 2024;

4. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງສະຫວັນນະເຂດ;

5. ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

6. ການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງຄະນະປະຈຳສະພາປະຊາຊົນແຂວງ.

ນອກຈາກນີ້, ຍັງໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມຂອງ ສສຊ ແລະ ສສຂ ຈາກທ່ານເຈົ້າແຂວງໆສະ ຫວັນນະເຂດ, ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ຫົວໜ້າພະແນກການເງິນແຂວງ, ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ຮັກສາການຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫົວໜ້າກອງບັນຊາການ ປກສ ແຂວງ.

ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ອົງການປົກຄອງແຂວງ, ຄະນະບໍລິຫານງານພັກແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍ ມະຕິກອງປະຊຸມຄັ້ງນີ້ ເຂົ້າໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ນາງ ອາລິນ ສຸພົມມະປະດິດ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ທັງເປັນ ສສຂ ປະຈຳເມືອງສອງຄອນ ພ້ອມດ້ວຍການນຳຂອງເມືອງ, ຄະນະພັກບ້ານ ແລະ ພໍ່ແມ່ປະຊາຊົນ 2 ຈຸດພາຍໃນເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງການເຄື່ອນໄຫວແລະຢ້ຽມຢາມຄັ້ງນີ້ແມ່ນເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີII ແນໃສ່ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດແລະປະຊາຊົນບັນດາເຜົ່າ ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ເວົ້າລວມ, ເວົ້າສະເພາະວຽກງານຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນແຂວງ; ໄດ້ຮັບຮູ້ແລະເຂົ້າໃຈພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ແລະ ສສຂ ໃຫ້ເລິກເຊິ່ງກວ່າເກົ່າ.

ຫຼັງຈາກໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງແຕ່ລະກຸ່ມບ້ານ, ທ່ານ ນາງ ໄຊຊົມຊື່ນ ໂພທິສານ ສສຊປະຈຳເຂດເລືອກຕັ້ງທີ13 ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ7ຂອງ ສພຊ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນແຕ່ວັນທີ 10 ມິຖຸນາ ຫາ 02 ກໍລະກົດ 2024 ລວມ 17 ວັນ ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະວຽກງານສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີ IX.

ທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ສະຫວັນນະເຂດ ຊຸດທີ II ທີ່ຫາກໍສຳເລັດໃນວັນທີ 26 ກໍລະກົດຜ່ານມາ ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຊາບຕື່ມອີກ. ຫຼັງຈາກນັ້ນ, ກໍໄດ້ຮັບຟັງບັນຫາ, ຂໍ້ສະເໜີ, ຄວາມຂັດຂ້ອງໝອງໃຈຂອງອຳນາດການປົກຄອງບ້ານ ກໍຄືພໍ່ແມ່ປະຊາຊົນ ເຊິ່ງບາງບັນຫາກໍໄດ້ຕອບກັບທີ່, ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນກໍຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃນໂອກາດຕໍ່ໄປ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ທັງສອງບ້ານຍາດມາໄດ້ໃນໄລຍະຜ່ານມາ ທັງຕີລາຄາສູງຕໍ່ຄວາມດຸໝັ່ນແລະມີຫົວຄິດພັດທະນາຂອງປະຊາຊົນທັງສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງພໍ່ແມ່ປະຊາຊົນ ພ້ອມທັງເນັ້ນ ແລະ ໃຫ້ທິດຊີ້ນຳອຳນາດການປົກຄອງເມືອງ, ບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ຈົ່ງພ້ອມກັນຮັກສາຄວາມສາມັກຄີຮັກແພງເຊິ່ງກັນແລະກັນ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດໃນຄອບຄົວມີຄວາມເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ ນຳເອົາເມືອງສອງຄອນກ້າວຂຶ້ນຢ່າງໜັກແໜ້ນ. ຕໍ່ຂໍ້ສະເໜີຂອງພໍ່ແມ່ປະຊາຊົນສອງກຸ່ມບ້ານນັ້ນ ກໍໄດ້ມີການຊີ້ແຈງໃຫ້ເຂົ້າໃຈເປັນແຕ່ລະບັນຫາບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດເຮົາ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ, ອຸປະກອນການສຶກສາ ແລະ ກິລາ ໄປມອບໃຫ້ແກ່ແຕ່ລະກຸ່ມບ້ານອີກດ້ວຍ.

ກ່ອນໜ້ານີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຍັງໄດ້ໄປຢ້ຽມຢາມສູນເຝິກເປົ່າແຄນ, ຜະລິດແຄນແລະດົນຕີພື້ນບ້ານ ສະມາຄົມສິລະປິນລາວ ແຂວງສະຫວັນນະເຂດ ເພື່ອສົ່ງເສີມວັດທະນະທຳທີ່ເປັນເອກະລັກຂອງຊາດເຮົາ ເຊິ່ງແຄນກໍໄດ້ຖືກຮັບຮອງເປັນມໍລະດົກໂລກມາແລ້ວ ເພື່ອໃຫ້ຄົງຢູ່ນຳຊາດເຮົາຕໍ່ໄປ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະເມີນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 30 ກໍລະກົດ2024ທີ່ຫ້ອງປະຊຸມສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມປະເມີນຜົນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ເຫຼັກໄຫຼ ສີວິໄລ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆເຊກອງ; ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແລະ ສະມາຊິກສະພາປະຊາຊົນແຂວງ; ການນຳຂອງແຂວງ, ອົງການ, ຂະແໜງການ; ບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງທົ່ວແຂວງ ແລະ ແຂກຖືກເຊີນ. ຈຸດປະສົງແມ່ນເພື່ອສະຫຼຸບຕີລາຄາການປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາຢູ່ແຂວງເຊກອງ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດ ຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ທ່ານ ຄຳໃບ ດຳລັດ ໄດ້ກ່າວວ່າ: ເພື່ອເຮັດໃຫ້ການປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ແຂວງເຊກອງ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງແຂວງ, ຂໍໃຫ້ຜູ້ເຂົ້າຮ່ວມຈົ່ງລົງເລິກຕີລາຄາການປະຕິບັດລັດຖະທຳມະນູນຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການ, ຂະແໜງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍ ຕິດພັນກັບການສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນແລະກົດໝາຍໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນ ຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າ. ພ້ອມກັນນີ້, ກໍໃຫ້ມີຄຳຄິດຄຳເຫັນຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ ໂດຍສະເພາະໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ໝວດວ່າດ້ວຍອົງການປົກຄອງທ້ອງຖິ່ນ; ການປະຕິບັດສິດ ແລະພັນທະຂອງພົນລະເມືອງລາວ.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດປະເມີນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ຈາກທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງເຊກອງ; ຈາກນັ້ນ, ໄດ້ມີການປະກອບຄຳເຫັນ ລວມທັງຂໍ້ສະເໜີຕ່າງໆ ຈາກຕາງໜ້າຂົງເຂດອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ; ຂົງເຂດສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ; ຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ບັນດາອົງການປົກຄອງເມືອງ 4 ເມືອງຂອງແຂວງ.

**(ນາງ ກຸກກີກ ບຸດດາໄຊ)**

## ປອ. ນາງ ສູນທອນ...

(ຕໍ່ຈາກໜ້າ 1)

ອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີລະຫວ່າງປະຊາຊົນສອງຊາດ ລາວ-ມົງໂກລີ ກໍຄືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ເວົ້າລວມ, ເວົ້າສະເພາະລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນແລະສະພາຜູ້ແທນປະຊາຊົນນະຄອນຫຼວງອູລານບາຕໍ ໃຫ້ນັບມື້ນັບຂະ ຫຍາຍຕົວຍິ່ງໆຂຶ້ນ; ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດການພົບປະ ແລະ ເຮັດວຽກລະຫວ່າງ 2 ປະທານສະພາປະຊາຊົນນະຄອນຫຼວງ, ຕີລາຄາສູງທີ່ສອງຝ່າຍໄດ້ມີການລົງນາມໃນບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງອົງການນິຕິບັນຍັດຂອງສອງນະຄອນຫຼວງໃນໄລຍະປີ 2024-2026 ເຊິ່ງທັງສອງຝ່າຍຈະໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆ, ແລກປ່ຽນບົດຮຽນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ຂໍ້ມູນຂ່າວສານ, ສະໜັບສະໜູນ ແລະ ຊ່ວຍເຫຼືອກັນ. ພ້ອມກັນນັ້ນ, ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ແຈ້ງໂດຍຫຍໍ້ສະພາບການທີ່ພົ້ນເດັ່ນຂອງ ສປປ ລາວແລະການເຄື່ອນໄຫວຂອງສະພາແຫ່ງຊາດໃນປັດຈຸບັນ ໃຫ້ຄະນະຊາບອີກ.

ທ່ານ ຈ. ບັດບາຍາສ໌ກາລັງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານຜົນການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວໃນຄັ້ງນີ້ໂດຍສະເພາະການພົບປະ ແລະ ເຮັດວຽກກັບປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ເຊິ່ງສອງຝ່າຍໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ; ທັງຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ທີ່ໄດ້ຮັບການພັດທະນາຂຶ້ນຢ່າງຕໍ່ເນື່ອງ ເຊິ່ງສະ ແດງອອກມີການໄປມາຫາສູ່ ແລະ ແລກປ່ຽນຄະນະຜູ້ແທນຂັ້ນສູງນຳກັນຢ່າງປົກກະຕິ.

**(ນາງ ອາລິນ ສຸພົມມະປະດິດ)**

# ປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ທີ່ແຂວງບໍລິຄຳໄຊ



(ສພຊ) - ກອງປະຊຸມປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 (ໄລຍະ 2015 ຫາ ປີ 2024) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 17 ກໍລະກົດ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ສຸວັນນີ ໄຊຊະນະຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີຮອງປະທານສະພາປະຊາຊົນແຂວງ, ຕາງໜ້າຂົງເຂດຕຸລາການ, ສານປະຊາຊົນ, ອົງການໄອຍະການ, ພະແນກຍຸຕິທຳ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ຕະຫຼອດຮອດພະນັກງານຫຼັກແຫ່ງທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໄລຍະ 2015 ຫາປີ 2025 ໃຫ້ບັນດາຜູ້ເຂົ້າຮ່ວມໄດ້ຮັບຊາບ ການປັບປຸງລັດຖະທຳມະນູນ ປີ 2015 ເພື່ອເປັນການປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບສູງ,ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນໃນໄລຍະໃໝ່ ການປັບປຸງລັດຖະທຳມະນູນສະບັບປີ 2003 ໃນປີ 2015 ເຊິ່ງເປັນການປັບປຸງຄັ້ງທີ 2 ແລະ ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII, ປະກອບມີ 14 ໝວດ ແລະ 119 ມາດຕາ, ເພີ່ມຂຶ້ນ 3 ໝວດ ຄື: ໝວດທີ8ສະພາປະຊາຊົນທ້ອງຖິ່ນ, ໝວດທີ 11 ການກວດສອບແຫ່ງລັດ ແລະ ໝວດທີ 12 ຄະນະກຳມະການເລືອກຕັ້ງ ແລະ 21 ມາດຕາ ການສ້າງ, ປະກາດໃຊ້ ແລະ ປັບປຸງລັດຖະທຳມະນູນສອງຄັ້ງທີ່ຜ່ານມາ ເຮັດໃຫ້ນິຕິກຳສູງສຸດຂອງປະເທດເຮົາມີຄວາມຖືກຕ້ອງ,ສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ, ກາຍເປັນພາຫະນະພື້ນຖານໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ໃຫ້ດີຂຶ້ນ, ສ້າງເງື່ອນໄຂພື້ນຖານໃຫ້ແກ່ການສ້າງລັດເຮົາໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນເທື່ອລະກ້າວ.

ກອງປະຊຸມໃນຄັ້ງນີ້ ກໍເພື່ອເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ໃນໄລຍະເກືອບ 10 ປີ ທີ່ຜ່ານມາ ສາມາດເຫັນໄດ້ຂໍ້ສະດວກ,ຂໍ້ຫຍຸ້ງຍາກ,ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ຄົ້ນຄວ້າ, ປັບປຸງເນື້ອໃນບົດບັນຍັດຂອງລັດຖະທຳມະນູນ ສະບັບປີ 2015 ທີ່ບໍ່ສອດຄ່ອງ ໃຫ້ມີເນື້ອໃນທີ່ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະ ລັດເຮົາໃນໄລຍະໃໝ່,ກາຍເປັນກົດໝາຍພື້ນຖານສຳຄັນຂອງປະເທດຊາດ,ເປັນບ່ອນອີງໃຫ້ແກ່ການສ້າງ ແລະ ການປັບປຸງບັນດາກົດໝາຍ ເພື່ອເປັນເຄື່ອງມືຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ,ສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ,ເລິກເຊິ່ງແລະຮອບດ້ານໃນການນຳພາຂອງພັກ.

# ກອງປະຊຸມຮ່ວມລະຫວ່າງຄະນະປະຈຳ ສພຂ ກັບອົງການປົກຄອງແຂວງຄຳມ່ວນ



(ສພຊ) - ໃນຕອນເຊົ້າຂອງວັນທີ 18 ກໍລະກົດ 2024 ທີ່ສຳນັກງານສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳ ສພຂ ຄຳມ່ວນ ກັບອົງການປົກຄອງແຂວງຄຳມ່ວນ ໂດຍໃຫ້ກຽດເປັນປະທານຮ່ວມຂອງທ່ານວັນໄຊພອງສະຫວັນ ເຈົ້າແຂວງຄຳມ່ວນ ແລະ ທ່ານ ບຸນມີ ພິມມະສອນ ປະທານ ສພຂ ຄຳມ່ວນ, ມີບັນດາທ່ານຮອງປະທານ ສພຂ, ຮອງເຈົ້າແຂວງ, ຄະນະປະຈຳ ສພຂ, ຫົວໜ້າພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ບັນດາທ່ານທີ່ເຂົ້າຮ່ວມໄດ້ຮັບຟັງການຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ຄຳມ່ວນ ຊຸດທີ II; ຮັບຟັງການລາຍງານສະພາບຄວາມຄືບໜ້າໃນການຫ້າງຫາກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມ; ແລະ ຮັບຟັງລາຍງານຜົນການກະກຽມການນິຕິກຳໃຕ້ກົດໝາຍ ຂອງອົງການປົກຄອງແຂວງກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ ສະບັບເລກທີ 333/ຈຂ.ຄມ, ລົງວັນ 3 ມີນາ 2020; ພ້ອມນັ້ນ, ກອງປະຊຸມຍັງໄດ້ມີຄຳເຫັນຄົ້ນຄວ້າແລະປະກອບຄຳຄິດຄຳເຫັນໃສ່ບັນດາເນື້ອໃນເອກະສານດັ່ງກ່າວເພື່ອຄວາມເອກະພາບທາງດ້ານເນື້ອໃນ, ທັງນີ້ກໍເພື່ອເປັນການກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ຄຳມ່ວນ ຊຸດທີ II ໃຫ້ບັນລຸຕາມລະດັບຄາດໝາຍທີ່ວາງໄວ້, ແນໃສ່ຮັບປະກັນໃຫ້ການພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ, ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມເປັນເອກະພາບຕໍ່ເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາບັນຫາຕ່າງໆໃນກອງປະຊຸມໃຫ້ບັນລຸຜົນສຳເລັດໄດ້ເປັນຢ່າງດີ, ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ7ຂອງ ສພຂ ຄຳມ່ວນ ຊຸດທີ II ຄາດວ່າຈະໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນພຸດ ວັນທີ 24 ກໍລະກົດ ແລະຈະດຳເນີນໄປເຖິງວັນສຸກ, ວັນທີ 26 ກໍລະກົດ 2024 ທີ່ສະໂມສອນ21 ມີນາຂອງແຂວງ (ຫຼັກ 4), ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 2 ວັນເຄິ່ງ.

**(ເອື້ອ ມະໂນສິງ)**

# ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຢູ່ຂັ້ນເມືອງ



(ສພຊ) - ໃນລະຫວ່າງວັນທີ 8-10 ກໍລະກົດ 2024 ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ສະມາຊິກສະພາປະຊາຊົນແຂວງສາລະວັນໄດ້ລົງເຄື່ອນໄຫວພົບປະແລະຕິດຕາມ-ກວດກາກ່ອນການດຳເນີນກອງປະຊຸມສະໄໝນາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງສາລະວັນຊຸດທີ II ແລະ ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຜນງົບປະມານແຫ່ງລັດປະຈຳ 6 ເດືອນຕົ້ນປີ 2024 ຢູ່ 7 ເມືອງ ແລະ 11 ບ້ານຂອງແຂວງສາລະວັນ; ການເຄື່ອນໄຫວໄດ້ແບ່ງຄະນະອອກເປັນ3 ທີມຄື: ທີມທີ 1 ນຳພາໂດຍທ່ານສີເຮັງຫອມສົມບັດຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະເຄື່ອນໄຫວຢູ່ເມືອງສະໝ້ວຍ, ເມືອງຕະໂອ້ຍແລະເມືອງຕຸ້ມລານ; ທີມທີ 2 ນຳພາໂດຍທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງຮອງປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະເຄື່ອນໄຫວຢູ່ເມືອງລະຄອນເພັງ ແລະ ເມືອງຄົງເຊໂດນ; ທີມທີ 3 ນຳພາໂດຍທ່ານນາງສູນໄຖໄຊຍະແສງກຳມະການພັກແຂວງຮອງປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະເຄື່ອນໄຫວຢູ່ເມືອງເລົ່າງາມ ແລະເມືອງວາປີ.

ການລົງເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອເປັນການຍົກສູງຄວາມຮັບຜິດຊອບຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງໄດ້ເຄື່ອນໄຫວຕິດຕາມ-ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳ 6 ເດືອນຕົ້ນປີ 2024, ການຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນເມືອງແລະກຸ່ມບ້ານ ສາມາດຕີລາຄາຄືນໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ວິທີແກ້ໄຂໃນຕໍ່ໜ້າ; ທັງເກັບກຳຂໍ້ມູນໃຫ້ສະມາຊິກສະພາປະຊາຊົນແຂວງກະກຽມນຳເຂົ້າຄົ້ນຄວ້າ, ພິຈາລະນາແລະຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງສາລະວັນຊຸດທີII ທີ່ຈະຈັດຂຶ້ນໃນທ້າຍເດືອນກໍລະກົດທີ່ຈະມາເຖິງນີ້;

ໃນແຕ່ລະເມືອງ ສະພາປະຊາຊົນແຂວງໄດ້ເປີດກອງປະຊຸມເຮັດວຽກຮ່ວມກັບອົງການປົກຄອງຂັ້ນເມືອງ ໂດຍການຕ້ອນຮັບແລະເຂົ້າຮ່ວມກອງປະຊຸມຂອງທ່ານເລຂາພັກເຈົ້າເມືອງ, ທ່ານຮອງເຈົ້າເມືອງແລະບັນດາທ່ານຄະນະປະຈຳພັກເມືອງ, ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການອ້ອມຂ້າງເມືອງ, ໃນວາລະທ່ານເຈົ້າເມືອງ-ຮອງເຈົ້າເມືອງໄດ້ຕາງໜ້າລາຍງານໂດຍຫຍໍ້ສະພາບການຈັດຕັ້ງປະຕິບັດຂໍ້ສະດວກ, ຂໍ້ຫຍຸ້ງຍາກຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳ 6 ເດືອນຕົ້ນປີ 2024 ແລະທິດທາງແຜນການ6ເດືອນທ້າຍປີ 2024, ລາຍງານສະພາບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ພ້ອມທັງໄດ້ແລກປ່ຽນສົນທະນາລົງເລິກບາງບັນຫາໃນແຕ່ລະຂົງເຂດວຽກງານ ເປັນຕົ້ນ: ການຄຸ້ມໂຄງການຕ່າງໆທີ່ອະນຸມັດໃຫ້ບໍລິສັດສຳປະທານລົງທຶນ, ສະພາບການຈັດເກັບລາຍຮັບເຂົ້າງົບປະມານ, ສະພາບການເກີດຂຶ້ນແລະແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມແລະມີຄຳສະເໜີເພື່ອໃຫ້ສະພາປະຊາຊົນແຂວງເປັນໃຈກາງໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງຊ່ວຍຫາທາງແກ້ໄຂ; ພ້ອມນັ້ນ, ຄະນະທີມງານສະພາປະຊາຊົນແຂວງຍັງໄດ້ເຄື່ອນໄຫວພົບປະຢ້ຽມຢາມຖາມຂ່າວຜູ້ມີສິດເລືອກຕັ້ງຂອງຕົນຈຳນວນ 11 ບ້ານເປົ້າໝາຍຂອງແຕ່ລະເມືອງເພື່ອຕິດຕາມຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດຂອງບ້ານໄລຍະ 6 ເດືອນຕົ້ນປີ2024 ແລະເກັບກຳຮັບເອົາຄຳສະເໜີຄວາມຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ;

ການເຄື່ອນໄຫວໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ STEPs.

**(ດີລຳພົນ ພົມມະຈັນ)**

# ກອງປະຊຸມຮ່ວມລະຫວ່າງຄະນະປະຈຳ ສພຂ ກັບ ອົງການປົກຄອງແຂວງອັດຕະປື




(ສພຊ) - ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ (ສພຂ) ອັດຕະປື ກັບອົງການປົກຄອງແຂວງອັດຕະປື ເພື່ອຍົກສູງຄຸນນະພາບທາງດ້ານເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ຊຸດທີ II ໄດ້ຈັດຂຶ້ນວັນທີ 18 ກໍລະກົດ 2024 ທີ່ຫ້ອງປະຊຸມ ສພຂ ອັດຕະປືໂດຍການເປັນປະທານຮ່ວມຂອງທ່ານ ນາງ ມີນາ ພອນໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ ແລະ ທ່ານ ທະນູໄຊ ບັນຊາລິດຄະນະປະຈຳພັກແຂວງ, ຮອງເຈົ້າແຂວງອັດຕະປື, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະປະຈຳພັກແຂວງ, ຄະນະກຳມະການ, ຫົວໜ້າພະແນກການ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຈຳນວນໜຶ່ງ.

ກອງປະຊຸມຮ່ວມກັນໃນຄັ້ງນີ້ ຈະໄດ້ພ້ອມກັນຄົ້ນຄວ້າເອົາເນື້ອໃນທີ່ສຳຄັນພົ້ນເດັ່ນຫຼາຍບັນຫາ ເພື່ອຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ທີ່ຈະໄຂຂຶ້ນໃນລະຫວ່າງວັນທີ 30 ກໍລະກົດ-1 ສິງຫາ 2024 ເຊິ່ງເນື້ອໃນທີ່ນຳມາຄົ້ນຄວ້າປຶກສາຫາລືແລະ ຜ່ານໃນກອງປະຊຸມມີຄື: ຮັບຟັງການລາຍງານແຜນການກະກຽມການດຳເນີນກອງປະຊຸມເພື່ອພ້ອມກັນຄົ້ນຄວ້າ, ພິຈາລະນາຕົກລົງເຫັນດີເປັນເອກະພາບຕໍ່ກັບການກຳນົດເນື້ອໃນທີ່ຈະນຳເຂົ້າພິຈາລະນາແລະຮັບຮອງໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ຊຸດທີ II ຕາມມາດຕາ 60 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນປະຈຳ 6 ເດືອນຕົ້ນປີ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ຮັບຟັງການລາຍງານຈາກພະແນກແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ 2024 ແລະທິດທາງແຜນການ 6 ເດືອນທ້າຍປີ 2024; ຮັບຟັງການລາຍງານຈາກພະແນກການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳ 6 ເດືອນຕົ້ນປີ 2024 ແລະທິດທາງແຜນການ 6 ເດືອນທ້າຍປີ 2024; ຮັບຟັງການລາຍງານຈາກຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງອັດຕະປື ສະບັບເລກທີ 1712/ຈຂ.ອປ, ລົງວັນທີ 12 ພະຈິກ 2019 ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນຂອງແຂວງ; ຮັບຟັງການລາຍງານຈາກສະຫະພັນກຳມະບານແຂວງກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ສະບັບເລກທີ 249/ຈຂ.ອປ, ລົງວັນທີ 23 ກຸມພາ 2022 ວ່າດ້ວຍກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນ; ຮັບຟັງການຜ່ານຮ່າງຂໍ້ຕົກລົງຮ່ວມລະຫວ່າງ ສພຂ ກັບອົງການປົກຄອງແຂວງ.

ເພື່ອຮັບປະກັນທາງດ້ານເນື້ອໃນຕໍ່ກັບບັນຫາທີ່ໄດ້ສະເໜີມາຂ້າງເທິງນີ້ ໃຫ້ມີຄຸນນະພາບ, ປະສິດທິຜົນ ແລະບັນລຸຜົນຕາມແຜນການທີ່ວາງໄວ້, ປະທານກອງປະຊຸມສະເໜີໃຫ້ຜູ້ແທນກອງປະຊຸມໄດ້ມີຄຳຄິດຄຳເຫັນແລກປ່ຽນ ເຊິ່ງກັນແລະກັນ ເພື່ອໃຫ້ເນື້ອໃນຄົບຖ້ວນ ແລະ ຮັດກຸມເຕັມໄປດ້ວຍຄຸນນະພາບ, ຄະນະປະທານກອງປະຊຸມ ຈຶ່ງຮຽກຮ້ອງມາຍັງບັນດາທ່ານຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະມີຄຳຄິດຄຳເຫັນ ເພື່ອແລກປ່ຽນໃນກອງປະຊຸມຄັ້ງນີ້, ເພື່ອເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາແລະຮັບຮອງໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອ 7 ຂອງ ສພຂ ຊຸດທີ II ໄດ້ຮັບປະສິດທິຜົນຕາມລະດັບຄາດໝາຍ.

**(ນາງ ຈັນທະຈອນ ໂກພິຈິດ)**

# ພິທີມອບ-ຮັບໜ້າທີ່ເລຂາທິການ ສະພາປະຊາຊົນແຂວງຫຼວງພະບາງ



(ສພຊ) - ວັນທີ 9 ກໍລະກົດ 2024 ທີ່ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດຕັ້ງພິທີມອບ-ຮັບໜ້າທີ່ ລະຫວ່າງເລຂາທິການສະພາປະຊາຊົນແຂວງຫຼວງພະບາງ (ຜູ້ເກົ່າ) ແລະ (ຜູ້ໃໝ່) ພາຍໃຕ້ການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫຼວງພະບາງ; ມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ເລຂາທິການ-ຮອງເລຂາທິການສະພາປະຊາຊົນແຂວງ, ແຂກຖືກເຊີນຈາກຄະນະຈັດຕັ້ງແຂວງ, ພະແນກພາຍໃນແຂວງ, ຫ້ອງວ່າການແຂວງ ແລະ ອົງການກວດກາພັກ-ລັດແຂວງ ຕະຫຼອດຮອດຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ທ່ານ ນາງ ແກ້ວລາ ມະນີຈິດ ເລຂາທິການສະພາປະຊາຊົນແຂວງ (ຜູ້ເກົ່າ) ໄດ້ຂຶ້ນຜ່ານບົດລາຍງານການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕະຫຼອດໄລຍະ 3 ປີຜ່ານມາ ເຊິ່ງສາມາດຍາດໄດ້ຜົນສຳເລັດຫຼາຍດ້ານພົ້ນເດັ່ນກວ່າໝູ່ແມ່ນ ດ້ານບຸຄະລາກອນ ເຊິ່ງໄດ້ສົ່ງເສີມໃຫ້ພະນັກງານ-ລັດຖະກອນໄປຍົກລະດັບຄວາມຮູ້ວິຊາສະເພາະຈຳນວນ 10 ທ່ານ ຍິງ 2 ທ່ານ ແລະ ໄປຍົກລະດັບທິດສະດີໃນຂັ້ນຕ່າງໆ ຈຳນວນ 5 ສະຫາຍ ຍິງ 4 ສະຫາຍ, ໄດ້ສະເໜີທາບທາມ ແລະ ແຕ່ງຕັ້ງຮອງເລຂາທິການສະພາປະຊາຊົນແຂວງ ຈຳນວນ 1 ທ່ານ ແລະ ໄດ້ປະກອບສ່ວນວັດຖຸປັດໄຈແລະຊອກຫາແຫຼ່ງທຶນນຳຜູ້ປະກອບການທຸລະກິດ ເພື່ອນຳໄປຊ່ວຍເຫຼືອປະຊາຊົນຜູ້ທີ່ຂາດເຂີນ ລວມມູນຄ່າຫຼາຍກວ່າ 90 ລ້ານກີບ ນັ້ນແມ່ນຜົນງານພົ້ນເດັ່ນທີ່ສາມາດຍາດໄດ້ໃນໄລຍະຜ່ານມາ; ຈາກນັ້ນ, ທ່ານ ທອງພັນ ຈັນທະສຸກ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງ ທ່ານ ສີວອນ ວົງຄຳຈັນ ກຳມະການພັກແຂວງ ເປັນຄະນະປະຈຳ ແລະ ເລຂາທິການສະພາປະຊາຊົນແຂວງ (ຜູ້ໃໝ່) ແລະ ໄດ້ແຕ່ງຕັ້ງທ່ານ ນາງ ແກ້ວລາ ມະນີຈິດ ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ພ້ອມນັ້ນ, ບັນດາທ່ານທີ່ຖືກແຕ່ງຕັ້ງກໍໄດ້ພ້ອມກັນລົງນາມການມອບ-ຮັບໜ້າທີ່ ຢ່າງເປັນທາງການ.

ໃນຕອນທ້າຍພິທີ, ທ່ານ ວົງສະຫວັນ ເທບພະຈັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ເລຂາທິການສະພາປະຊາຊົນແຂວງ (ຜູ້ເກົ່າ) ທີ່ສາມາດຍາດໄດ້ຜົນສຳເລັດຫຼາຍ ພ້ອມທັງໄດ້ໃຫ້ຄຳໂອວາດ ແລະ ມີຄຳເຫັນໂອ້ລົມ ຕໍ່ພິທີດັ່ງກ່າວ ກໍຄືເລຂາທິການສະພາປະຊາຊົນແຂວງ (ຜູ້ໃໝ່) ໃຫ້ເອົາໃຈໃສ່ໃນການເປັນເສນາທິການຮອບດ້ານ ໃຫ້ແກ່ສະພາປະຊາຊົນແຂວງ ກໍຄືຄະນະປະຈຳ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນ ດ້ວຍຄວາມຮັບຜິດຊອບສູງ ສືບຕໍ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະນິຕິກຳໃຕ້ກົດໝາຍ ໃຫ້ສຳເລັດລຸລ່ວງລະດັບຄາດໝາຍທີ່ວາງໄວ້.

**(ວິລິຍະ ວັນນະສີ)**

# ພິທີມອບ-ຮັບໜ້າທີ່ ລະຫວ່າງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ

(ສພຊ) - ຕອນບ່າຍຂອງວັນທີ 23 ກໍລະກົດ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ພາຍໃຕ້ການເປັນປະທານຂອງສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາສະຫາຍຄະນະປະຈຳສະພາປະຊາຊົນແຂວງ, ແຂກເຊີນຈາກພາກສ່ວນຕ່າງໆ ແລະ ພະນັກງານ-




ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນພິທີ, ທ່ານທອງຄານ ວັດສະດາກອນ ປະທານ ຄຍປປ ຜູ້ເກົ່າ ໄດ້ຜ່ານບົດບັນທຶກມອດວຽກວຽກຂອງປະທານ ຄຍປປ ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່. ຈາກນັ້ນ, ທ່ານ ພັທ. ສອນວິໄລ ຕຸລາທອງ ປະທານ ຄຍປປ ຜູ້ໃໝ່ ໄດ້ຂຶ້ນກ່າວຮັບ ພ້ອມທັງຜ່ານບົດບັນທຶກມອບວຽກຂອງເລຂາໜ່ວຍພັກ ໃຫ້ຄະນະພັກໜ່ວຍພັກຮາກຖານສະພາປະຊາຊົນແຂວງ ເຊິ່ງຂຶ້ນກ່າວຮັບໂດຍທ່ານ ນາງ ວັນສີ ພວງມະໄລ ຮອງເລຂາໜ່ວຍພັກຮາກຖານສະພາປະຊາຊົນແຂວງ. ພ້ອມນັ້ນ ໄດ້ເຊັນບົດບັນທຶກມອບ-ຮັບໜ້າທີ່ເຊິ່ງກັນແລະກັນ ຢ່າງເປັນທາງການ.

ໂອກາດດັ່ງກ່າວ, ສະຫາຍ ຄຳດີວົງລ້ອມ ໄດ້ມີຄຳຄິດຄຳເຫັນໂອ້ລົມຕໍ່ພິທີ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດການນຳພາ-ຊີ້ນຳ, ຜົນງານໃນໄລຍະຜ່ານມາຂອງ ຄຍປປ ແລະ ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນຂອງການຊັບຊ້ອນປ່ຽນແທນໜ້າທີ່ຄວາມຮັບຜິດຊອບຂອງພະນັກງານນຳພາຄຸ້ມຄອງຕາມການຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຂອງຂັ້ນເທິງວາງອອກ. ພ້ອມນັ້ນ, ຍັງໄດ້ເນັ້ນໜັກໃຫ້ປະທານ ຄຍປປ ຜູ້ໃໝ່ ແລະ ຄະນະພັກໜ່ວຍພັກ ຈົ່ງສືບຕໍ່ນຳພາ-ຊີ້ນຳ, ປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບ.

**(ສີແຫວງ ສີບຸນເຮືອງ)**

# ຄະນະຜູ້ແທນ ສພຂ ກອນຕູມ ພົບປະແລກປ່ຽນບົດຮຽນກັບ ສພຂ 3 ແຂວງພາກໃຕ້

(ສພຊ) - ໃນລະຫວ່າງວັນທີ 15-19 ກໍລະກົດ 2024 ຄະນະຜູ້ແທນສະພາປະຊາຊົນແຂວງ (ສພຂ) ກອນຕູມ ແຫ່ງ ສສ.ຫວຽດນາມ ນຳໂດຍສະຫາຍ ເຢືອງ ວັນ ຈາງ ເລຂາພັກແຂວງ, ປະທານ ສພຂ ກອນຕູມ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມເຮັດວຽກແລະພົບປະສອງຝ່າຍກັບ ສພຂ 3 ແຂວງຂອງ ສປປ ລາວ ຄື: ອັດຕະປື, ສາລະວັນ ແລະ ຈຳປາສັກ ເຊິ່ງການພົບປະທີ່ແຂວງອັດຕະປືໄດ້ມີພິທີພົບປະແລກປ່ຽນບົດຮຽນ ລະຫວ່າງ ສພຂ ອັດຕະປື ແລະ ສພຂ ກອນຕູມ ທີ່ຫ້ອງວ່າການປົກຄອງແຂວງອັດຕະປື ເຊິ່ງຝ່າຍແຂວງອັດຕະປືນຳໂດຍສະຫາຍ ນາງ ມິນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວ, ສະຫາຍ ນາງ ມິນາພອນ ໄຊສົມພູ ຮອງເລຂາພັກແຂວງ ປະທານ ສພຂ ອັດຕະປື ໄດ້ກ່າວຕ້ອນຮັບການມາຢ້ຽມຢາມແລະເຮັດວຽກຄະນະຜູ້ແທນ ສພຂ ກອນຕູມ ເຊິ່ງຖືເປັນຂີດໝາຍສຳຄັນຍິ່ງ ແລະ ເປັນເຫດການທາງປະຫວັດສາດ ເປັນການຮັດແໜ້ນຄວາມສາມັກຄີຮັກແພງ ຖານບ້ານໃກ້ເຮືອນຄຽງ ບ້ານແກ່ວເມືອງດອງທີ່ດີງາມມາແຕ່ດົນນານຂອງສອງຊາດລາວຫວຽດນາມ, ປັດຈຸບັນແຂວງອັດຕະປື ເວົ້າລວມ ເວົ້າສະເພາະ ສພຂ ພວມສຸມໃສ່ຈັດຕັ້ງປະຕິບັດມະຕິ XI ຂອງພັກ ແລະມະຕິກອງປະຊຸມສະໄໝທີ XI ຂອງອົງຄະນະພັກແຂວງ ແລະກະກຽມສ້າງຂະບວນການຮັບຕ້ອນ 2 ວັນປະຫວັດສາດທີ່ສຳຄັນຄື: ວັນສົນທິສັນຍາມິດຕະພາບ ແລະການຮ່ວມມືຮອບດ້ານລາວ-ຫວຽດນາມຄົບຮອບ 47 ປີຄື: ວັນທີ 18 ກໍລະກົດ 1977 ຫາ 18 ກໍລະກົດ 2024 ແລະວັນສ້າງຕັ້ງສາຍພົວພັນການທູດຂອງສອງປະເທດ ຄົບຮອບ 62 ປີ ຄື: ວັນທີ 5 ກັນຍາ 1962-5 ກັນຍາ 2024 ທີ່ຈະມາເຖິງໃນມໍ່ໆນີ້.



ໂອກາດດັ່ງກ່າວທັງສອງຝ່າຍໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງຕົນໃຫ້ກັນຮັບຊາບແລະໄດ້ລົງເລິກຄົ້ນຄວ້າປຶກສາຫາລືແລກປ່ຽນບົດຮຽນນຳກັນ ໂດຍມີການທົບທວນຄືນຜົນການຮ່ວມມື ເຮັດວຽກຮ່ວມກັນໃນໄລຍະທີ່ຜ່ານມາຂອງສອງແຂວງ ກໍຄື ສພຂ ອັດຕະປື ແລະ ສພຂ ກອນຕູມ ເຊິ່ງຜ່ານມາການຮ່ວມມືຂອງສອງຝ່າຍ ໄດ້ດຳເນີນໄປດ້ວຍບັນຍາກາດຄວາມມິດໄມຕີຈິດມິດຕະພາບ ບົນພື້ນຖານທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ເທົ່າທຽມກັນ, ການພົບປະແລກປ່ຽນບົດຮຽນເທື່ອນີ້ ທັງສອງຝ່າຍໄດ້ເຫັນດີຮັບເອົາບົດຮຽນເຊິ່ງກັນແລະກັນ ເພື່ອໄປໝູນໃຊ້ເຂົ້າໃນພຶດຕິກຳຕົວຈິງຂອງການເຄື່ອນໄຫວວຽກງານສພຂກອນຕູມ ແລະ ສພຂ ອັດຕະປື ໃຫ້ເກີດປະໂຫຍດສູງສຸດ.

ກ່ອນການພົບປະຄັ້ງນີ້, ຄະນະຜູ້ແທນສພຂອັດຕະປືຍັງໄດ້ຈັດງານລ້ຽງຕ້ອນຮັບ ພ້ອມຈັດພິທີບາສີສູ່ຂວັນຕາມຮີດຄອງປະເພນີຂອງລາວ ໃຫ້ກັບຄະນະຜູ້ແທນສພຂກອນຕູມແລະລົງເຄື່ອນໄຫວຢ້ຽມຢາມສະຖານທີ່ສຳຄັນຂອງແຂວງຢູ່ເມືອງໄຊເສດຖາ ໂດຍສະເພາະໄດ້ໄປກາບໄຫວ້ພະເຈົ້າໄຊເສດຖາທິລາດ ນຳອີກ.

ທີ່ແຂວງສາລະວັນ, ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງຄະນະຜູ້ແທນສພຂສາລະວັນແຫ່ງສປປລາວກັບຄະນະຜູ້ແທນ ສພຂ ກອນຕູມ ແຫ່ງ ສສ. ຫວຽດນາມ ທີ່ຫ້ອງປະຊຸມ VIP ຂອງສະໂມສອນແຂວງສາລະວັນຝ່າຍແຂວງສາລະວັນ ນຳໂດຍສະຫາຍ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ; ຝ່າຍແຂວງກອນຕູມ; ເຂົ້າຮ່ວມກອງປະຊຸມມີຕາງໜ້າຈາກພະແນກການຕ່າງປະເທດ ແລະ ຄະນະນຳຂອງສະພາປະຊາຊົນສອງຝ່າຍ.

ໂອກາດພົບປະຄັ້ງນີ້, ສະຫາຍ ສີເຮັງ ຫອມສົມບັດ ໄດ້ກ່າວຕ້ອນຮັບຄະນະຜູ້ແທນສພຂກອນຕູມສສ.ຫວຽດນາມໂດຍໄດ້ສະແດງຄວາມປິຕິຊົມຊື່ນ ແລະ ຍິນດີຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງ ສພຂ ກອນຕູມ ແຫ່ງ ສສ. ຫວຽດນາມ ທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງສາລະວັນຄັ້ງນີ້ ຢ່າງສຸດອົກສຸດໃຈ, ສພຂ ສາລະວັນສຸດທີ່ພູມໃຈທີ່ໄດ້ຮ່ວມກັບຄະນະຜູ້ແທນສພຂກອນຕູມຮ່ວມກັນຈັດກອງປະຊຸມພົບປະແລກປ່ຽນບົດຮຽນຂອງສອງສະພາເຊິ່ງມີຄວາມໝາຍສຳຄັນ ແລະ ເລິກເຊິ່ງ ເຊິ່ງສະແດງເຖິງການຮັດແໜ້ນຄວາມສາມັກຄີພິເສດທີ່ມີມູນເຊື້ອອັນຍາວນານຂອງສອງພັກ-ສອງລັດ ກໍຄືສອງຊາດລາວ-ຫວຽດນາມເວົ້າລວມ ເວົ້າສະເພາະກໍຄືສພຂສາລະວັນກັບສພຂກອນຕູມ, ກອງປະຊຸມຄັ້ງນີ້ ຍັງໄດ້ສະແດງເຖິງບົດບາດ, ຄວາມຮັບຜິດຊອບຂອງ ສພຂ ສາລະວັນ ກໍຄືສະພາທ້ອງຖິ່ນ ຕໍ່ບັນຫາທີ່ສຳຄັນຂອງທ້ອງຖິ່ນໃນວຽກງານການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍເຊື່ອໝັ້ນວ່າກອງປະຊຸມພົບປະຄັ້ງນີ້ບັນດາທ່ານຜູ້ແທນຈະໄດ້ພ້ອມກັນຫາລືແລກປ່ຽນບົດຮຽນອັນມີຄຸນຄ່າ ແລະສາມາດນຳໄປຈັດຕັ້ງປະຕິບັດຢ່າງມີຜົນສຳເລັດສູງ.

ຈາກນັ້ນ, ຕາງໜ້າສະພາປະຊາຊົນສອງແຂວງ ສາລະວັນ ແລະ ກອນຕູມ ໄດ້ຜັດປ່ຽນກັນຜ່ານບົດລາຍງານບາງເນື້ອໃນໂດຍຫຍໍ້ ຈຸດພິເສດທີ່ຕັ້ງຂອງແຂວງ, ພາລະບົດບາດ, ສິດແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃຫ້ຄະນະຜູ້ແທນກອງປະຊຸມໄດ້ຮັບຊາບ ແລະ ໄດ້ລົງເລິກຄົ້ນຄວ້າປຶກສາຫາລືແລກປ່ຽນບົດຮຽນນຳກັນ ເຊິ່ງເປັນຄັ້ງທຳອິດທີ່ໄດ້ທີ່ໄດ້ແລກປ່ຽນເຊິ່ງໄດ້ດຳເນີນໄປດ້ວຍບັນຍາກາດຄວາມມິດໄມຕີຈິດມິດຕະພາບ ບົນພື້ນຖານທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ເທົ່າທຽມກັນ, ການພົບປະແລກປ່ຽນບົດຮຽນເທື່ອນີ້ ທັງສອງຝ່າຍໄດ້ເຫັນດີຮັບເອົາບົດຮຽນເຊິ່ງກັນແລະກັນເພື່ອໄປໝູນໃຊ້ເຂົ້າໃນພຶດຕິກຳຕົວຈິງຂອງການເຄື່ອນໄຫວວຽກງານ ສພຂ ໃຫ້ດີຂຶ້ນເປັນກ້າວໆ.

ຄະນະຜູ້ແທນ ສພຂ ກອນຕູມ ຍັງໄດ້ເດີນທາງໄປຢ້ຽມຊົມຫ້ອງການສພຂສາລະວັນ ຫຼັງໃໝ່ ແລະ ຖືໂອກາດຄອບລາສິ່ງກັນຢ່າງເປັນທາງການເພື່ອໃຫ້ຄະນະຜູ້ແທນ ສພຂ ກອນຕູມ ເດີນທາງຕໍ່ໄປເຄື່ອນໄຫວ ແລະ ເຮັດວຽກຢູ່ທີ່ນະຄອນປາກເຊ ແຂວງຈຳປາສັກ.

ທີ່ ສພຂ ຈຳປາສັກ, ໄດ້ຮັບການຕ້ອນຮັບໂດຍສະຫາຍ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານ ສພຂ ຈຳປາສັກ ພ້ອມດ້ວຍຄະນະ ເຊິ່ງການພົບປະທັງສອງຝ່າຍໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍສະຫາຍ ສາຍທອງ ໄຊຍະວົງ ໄດ້ມີຄຳເຫັນກ່າວຕ້ອນຮັບດ້ວຍຄວາມປິຕິຊົມຊື່ນແລະຍິນດີຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງ ສພຂ ກອນຕູມ ແຫ່ງ ສສ ຫວຽດນາມ ທີ່ເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ແຂວງຈຳປາສັກ ໃນຄັ້ງນີ້ ພ້ອມທັງໄດ້ລາຍງານບາງເນື້ອໃນໂດຍຫຍໍ້ກ່ຽວກັບຈຸດພິເສດທີ່ຕັ້ງຂອງແຂວງ, ລາຍງາຍການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງ ສພຂ ຈຳປາສັກ ຕາມພາລະບົດບາດ, ສິດ ແລະ ໜ້າທີ່. ຈາກນັ້ນ, ສະຫາຍ ເຢືອງ ວັນ ຈາງ ໄດ້ມີຄຳເຫັນສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ສະເໜີຈຸດປະສົງຂອງການມາຢ້ຽມຢາມແລະເຮັດວຽກຢູ່ແຂວງຈຳປາສັກຄັ້ງນີ້, ກໍເພື່ອເປັນການເສີມຂະຫຍາຍສາຍພົວພັນການຮ່ວມມືພິເສດທີ່ມີມູນເຊື້ອອັນຍາວນານຂອງສອງພັກ-ສອງລັດ ກໍຄືສອງຊາດລາວ-ຫວຽດນາມເວົ້າລວມເວົ້າສະເພາະ ກໍຄືແຂວງຈຳປາສັກ ແລະ ແຂວງກອນຕູມ ໂດຍລົງເລິກຂົງເຂດວຽກງານຂອງ ສພຂ ຂອງພວກເຮົາ.

ຈາກນັ້ນ, ຄະນະຜູ້ແທນທັງສອງຝ່າຍໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງສພຂຢູ່ຫຼາຍຫົວຂໍ້ດ້ວຍກັນ ໃນນັ້ນ, ໄດ້ແລກປ່ຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາ, ວຽກງານການສ້າງ ແລະ ພິຈາລະນານິຕິກຳໃຕ້ກົດໝາຍ ແລະ ຍົກໃຫ້ເຫັນໂຄງປະກອບບຸຄະລາກອນ ແລະ ການແກ້ໄຂຄຳຮອງຂໍຄວາມເປັນທຳຂອງປະຊົນເຫັນວ່າການຈັດຕັ້ງປະຕິບັດວຽກງານຂອງທັງສອງ ສພຂ ມີຄວາມແຕກຕ່າງກັນບາງເນື້ອໃນ. ພ້ອມດຽວກັນ, ທັງສອງຝ່າຍໄດ້ຕີລາຄາຄືນຕໍ່ກັບຜົນສຳເລັດຂອງການພົບປະແລກປ່ຽນບົດຮຽນຂອງສອງ ສພຂ ໃນຄັ້ງນີ້, ເປັນບົດຮຽນທີ່ມີຄຸນຄ່າສຳຄັນຫຼາຍທີ່ຈະນຳເອົາໄປຈັດຕັ້ງຜັນຂະຫຍາຍເຂົ້າການຈັດຕັ້ງປະຕິບັດວຽກງານຂອງຕົນໃນຕໍ່ໜ້າ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນອັນຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງປະຊາຊົນສອງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະກໍຄືລະຫວ່າງ ສພຂ ຈຳປາສັກ ກັບສພຂກອນຕູມໃຫ້ມີຄວາມແໜ້ນແຟ້ນຈະເລີນງອກງາມ, ເກີດດອກອອກຜົນ ແລະ ໝັ້ນຄົງທະນົງແກ່ນຕະຫຼອດການ. ຈາກນັ້ນ, ຄະນະຜູ້ແທນສະພາປະຊາຊົນທັງສອງຝ່າຍ ໄດ້ມອບຂອງທີ່ລະລຶກທີ່ເປັນເອກະລັກຂອງທ້ອງຖິ່ນຕົນ

ການພົບປະແລກປ່ຽນບົດຮຽນຄັ້ງນີ້ຄະນະປະຈຳສພຂກອນຕູມ ຍັງໄດ້ມອບຄອມພິວເຕີ ແລັບທ໋ອບ ໃຫ້ ສພຂ ທັງ 3 ແຂວງ, ແຂວງລະ 10 ເຄື່ອງ ແລະເຄື່ອງພິມ 10 ເຄື່ອງ ລວມມູນຄ່າປະມານ 720 ລ້ານດົງ ເພື່ອນຳໃຊ້ເຂົ້າໃນໜ້າທີ່ວຽກງານໃຫ້ເກີດປະໂຫຍດສູງສຸດ.

**(ຈັນທະຈອນ ໂກພິຈິດ, ດີລຳພົນ ພົມມະຈັນ ແລະ ສົມວິຈິດ ໄຊມຸນຕີ)**

---

## ຈຳປາສັກ...

(ຕໍ່ຈາກໜ້າ 1)

ບັດລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີທ່ານ ອາລຸນໄຊ ສູນນະລາດ ເຈົ້າແຂວງງຈຳປາສັກ, ທ່ານປະທານສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ການນຳຂອງແຂວງ, ອົງການ, ຂະແໜງການ ແລະ ບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງທົ່ວແຂວງຈຳປາສັກ ແລະ ແຂກຖືກເຊີນເຂົ້າຮ່ວມຫຼາຍກວ່າ 150 ທ່ານ.

ທ່ານ ສົມມາດ ພົລເສນາ ໄດ້ກ່າວວ່າ: ເພື່ອເຮັດໃຫ້ການປະເມີນຜົນການປະຕິບັດລັດຖະທຳມະນູນຢູ່ແຂວງຈຳປາສັກ ໄດ້ຮັບໝາກຮັບຜົນ ແລະ ແທດເໝາະກັບສະພາບການຕົວຈິງຂອງແຂວງ, ຂໍໃຫ້ຜູ້ເຂົ້າຮ່ວມຈົ່ງລົງເລິກຕີລາຄາການປະຕິບັດລັດຖະທຳມະນູນຕິດພັນກັບການປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການ, ຂະແໜງການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຮາກຖານ ເປັນຕົ້ນການສ້າງຄວາມຮັບຮູ້, ເຂົ້າໃຈທີ່ຖືກຕ້ອງຕໍ່ລັດຖະທຳມະນູນ ແລະ ກົດໝາຍຕິດພັນກັບການສ້າງສະຕິເຄົາລົບແລະປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຖັນແຖວພະນັກງານ-ລັດຖະກອນ, ສະມາຊິກພັກ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າ. ພ້ອມກັນນີ້, ກໍໃຫ້ມີຄຳຄິດຄຳເຫັນຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນໂດຍສະເພາະໝວດວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ໝວດວ່າດ້ວຍອົງການປົກຄອງທ້ອງຖິ່ນ; ການປະຕິບັດສິດ ແລະພັນທະຂອງພົນລະເມືອງລາວ.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດປະເມີນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ຈາກທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ເຊິ່ງທ່ານໃຫ້ຮູ້ວ່າ: ການປັບປຸງລັດຖະທຳມະນູນຄັ້ງນີ້ຈະສຸມໃສ່ຄົ້ນຄວ້າ, ປັບປຸງເນື້ອໃນໃຫຍ່ທີ່ສຳຄັນຈຳນວນໜຶ່ງຫາກບໍ່ແມ່ນປັບປຸງໝົດສະບັບ ເຊັ່ນ: 1) ການກຳນົດບົດບາດນຳພາຂອງພັກ; 2) ຈຸດໝາຍສັງຄົມນິຍົມ; 3) ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ; 4) ການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາອົງການອຳນາດແຫ່ງລັດຂັ້ນສູນກາງ; 5) ການກຳນົດການແບ່ງຂັ້ນການປົກຄອງທ້ອງຖິ່ນ ເປັນຕົ້ນຂັ້ນຕາແສງ ລວມທັງການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ສາຍພົວພັນສາຍຕັ້ງ ແລະ ສາຍຂວາງ ຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ; 6) ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ກັບ ແຂວງ-ນະຄອນຫຼວງ, ລະຫວ່າງແຂວງ-ນະຄອນຫຼວງ ກັບ ຂັ້ນເມືອງ-ນະຄອນ, ຂັ້ນຕາແສງ ແລະ ຂັ້ນບ້ານ. ນອກຈາກເນື້ອໃນໃຫຍ່ດັ່ງກ່າວນີ້ອາດຈະຄົ້ນຄວ້າ, ປັບປຸງບາງເນື້ອໃນຍ່ອຍທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

ຈາກນັ້ນ, ໄດ້ມີການປະກອບຄຳເຫັນລວມທັງຂໍ້ສະເໜີຕ່າງໆຈາກຕາງໜ້າຂົງເຂດອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ; ຂົງເຂດສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກໃຕ້; ຂົງເຂດອົງການປົກຄອງແຂວງ; ກຸ່ມເສດຖະກິດ, ຜູ້ປະກອບການ, ວິສາຫະກິດ ແລະ ບັນດາອົງການປົກຄອງນະຄອນ-ເມືອງພາຍໃນແຂວງຈຳປາສັກ.

**(ນາງ ກຸກກິກ ບຸດດາໄຊ)**




# ເສດຖະສາດແນວພຸດ

# ດົ້ນກົບເມກ

ເສດຖະສາດແບບພຸດທະສາສະໜາ ເນັ້ນໃຫ້ຊີວິດຄົນກັບທຳມະຊາດ ໄປດ້ວຍກັນຢ່າງສົມດູນ, ການດຳເນີນຊີວິດໃນທາງປອດໃສ, ສຸດຈະລິດ, ການຄ້າຂາຍບໍ່ມີໂທດ ເນັ້ນສັງຄົມຢູ່ຮ່ວມກັນ ຢ່າງເມດຕາເອື້ອເຟື້ອ ບໍ່ບຽດບຽນເອົາປຽບກັນເຊິ່ງຖ້າວ່າສັງຄົມຫາກເອົາປຽບຄົນຈົນ, ມີການກົດຂີ່ເສດຖະກິດຝືດເຄືອງ ຄົນຫາກິນບໍ່ກຸ້ມປາກ-ສູນເສຍອາຊີບ ມັນຈະພາໃຫ້ເກີດຄົນຂີ້ລັກ-ໂຈນ ໃຊ້ຊີວິດເອົາຕົວລອດ ດ້ວຍການປຸ້ນຈີ້ສໍ້ໂກງ ເຊິ່ງຢ່າລືມວ່າ: ພວກເຂົາເຫຼົ່ານັ້ນອາດບໍ່ແມ່ນເປັນໂຈນໂດຍກຳເນີດ ອາດບໍ່ແມ່ນເປັນຂີ້ລັກໂດຍອາຊີບ ແຕ່ເສດຖະກິດບີບຮັດ ຈຶ່ງບີບໃຫ້ຊີວິດເອົາໂຕລອດໄປໃນທາງຜິດລະບຽບກົດໝາຍ.

ຫຼັກເສດຖະສາດ-ສ້າງເສດຖະກິດໃຫ້ເຂັ້ມແຂງດ້ວຍຕົນເອງແບບພຸດ ຈຶ່ງເນັ້ນໃຫ້ຄົນຮູ້ຈັກເອົາໃຈໃສ່ປະໂຫຍດຂອງປັດຈຸບັນ ເຊິ່ງມີຢູ່ 4 ຢ່າງຄື: 1. ໃຫ້ຮູ້ຈັກດຸໝັ່ນເອົາໃຈໃສ່ໜ້າວຽກ-ອາຊີບ,ຮູ້ຈັກໃຊ້ປັນຍາສະແຫວງຫາຊັບ ປັບປຸງແກ້ໄຂໜ້າວຽກ ພາສາທຳເອີ້ນວ່າ: ອຸດຖານະສຳປະທາ ຄືສອນໃຫ້ຂະຫຍັນບໍ່ຂີ້ຄ້ານມັກງ່າຍ; 2. ໃຫ້ຮູ້ຈັກຮັກສາຊັບທີ່ຫາມາໄດ້ ຫຼີກເວັ້ນ ໄດ້ຫ້າກິນສິບ ໃຫ້ຮູ້ຄຸນຄ່າຂອງຊັບທີ່ຫາຍາກ, ການຮູ້ຈັກເກັບຮັກສາໃຫ້ດີ ບໍ່ໃຫ້ຮົ່ວໄຫຼນັ້ນ ຖືເປັນສຸດຍອດໃນການຮູ້ຄຸນຄ່າຊັບ ພາສາທຳຂໍ້ນີ້ເອີ້ນວ່າ: ອາລັກຂາສຳປະທາຄືເຖິງພ້ອມດ້ວຍການຮັກສາ;3. ໃຫ້ຮູ້ຈັກຄົບມິດທີ່ດີ, ໝູ່ເພື່ອນທີ່ດີ, ມິດແນະນຳປະໂຫຍດ ໃຫ້ການຊ່ວຍເຫຼືອຍາມຕົກທຸກ-ມິດຊີ້ທາງຈະເລີນໃຫ້ ບໍ່ແມ່ນມິດດຶງແກ່ໄປຫາອະບາຍຍະມຸກທຸກເຊົ້າ-ແລງ ຂໍ້ນີ້ພາສາທຳເອີ້ນວ່າ: ກັນລະຍານະມິດຕະຕາ ຄືສອນໃຫ້ຮູ້ຈັກຄົບຄົນດີ ບໍ່ຄົບຄົນຊົ່ວເປັນມິດ; 4. ໃຫ້ຮູ້ຈັກລ້ຽງຊີບ, ດຳເນີນຊີວິດພໍດີ, ພໍພຽງ ບໍ່ຟຸມເຟືອຍ ໃຊ້ຈ່າຍບໍ່ມີເຫດຜົນ ພາສາທຳຂໍ້ນີ້ເອີ້ນວ່າ:ສະມະຊີວິຕາຄືດຳເນີນຊີວິດຢ່າງມີສົມດູນ ບໍ່ຝືດບໍ່ເຄືອງ ໃຫ້ພໍດີກັບຖານະ ຖ້າປຽບຫຼັກທຳ 4 ປະການໃສ່ສັງຄົມ ຫຼື ປະເທດໃດໜຶ່ງ ກໍຕ້ອງຮູ້ຈັກຫາ, ຮູ້ຈັກເກັບ, ຮູ້ຄົບ, ຮູ້ຈັກໃຊ້ ໃຫ້ເປັນຊັບທີ່ຫາມາໄດ້ກໍຈະເກີດປະໂຫຍດ ຖ້າຫາບໍ່ເປັນໃຊ້ຈ່າຍບໍ່ເປັນ ກໍຈະເກີດໂທດຕາມມາພາຍຫລັງ.

ຜູ້ຂຽນຍົກຫົວຂໍ້ທຳມາເປັນຕົວຢ່າງ ເພື່ອແລກປ່ຽນກັບຜູ້ອ່ານວ່າ ສົມເຫດສົມຜົນຫຼື ບໍ່? ການປະກອບອາຊີບຂອງຄົນເຮົາ ຖ້າວ່າໄດ້ຊັບຄືເງິນເດືອນມາແລ້ວ ຕ້ອງຮູ້ຈັກແບ່ງໃຊ້ແບ່ງຈ່າຍ, ປ້ອງກັນເງິນຂາດມື, ຜູ້ມີຊັບຕ້ອງຮູ້ອົດອອມ ໄວ້ຈ່າຍໃນຍາມຈຳເປັນ ສຳຄັນທີ່ສຸດແມ່ນຈ່າຍໃຫ້ສົມຖານະ, ມີກນ້ອຍເຮັດຮັງແຕ່ພໍໂຕ, ເຫັນຊ້າງຂີ້ຢາຂີ້ຕາມຊ້າງ ບູຮານສອນໄວ້ !.






# ທົນ– ທົນທານ

‘ທົນ’ ເປັນຄຳກິລິຍາ ໝາຍເຖິງ “ສູ້ໄດ້, ອົດກັ້ນໄດ້, ຢູ່ໄດ້ເຫິງນານ” ເຊັ່ນ

- ລາວທົນຕໍ່ວຽກງານທີ່ໜັກ.
- ຊາຍຄົນນັ້ນທົນກັບຄວາມທຸກທໍລະມານມາຫຼາຍປີ.
- ນາງທົນຢູ່ນຳຜົວບໍ່ໄດ້ ເພາະຖືກຕີເປັນປະຈຳ.
- ລາວທົນມຸດນ້ຳໄດ້ດົນກວ່າຂ້ອຍ.

‘ທົນ’ ຍັງໝາຍເຖິງ “ບໍ່ເພງ່າຍ’

- ຕັ່ງໄມ້ທົນກວ່າຕັ່ງປລາສະຕິກ.

‘ທົນ’ ຖ້າເປັນຄຳວິເສດ ກໍໝາຍເຖິງ “ແຂງແຮງ, ໝັ້ນຄົງ” ເຊັ່ນ

- ແຂ້ວພໍ່ຕູ້ສີຈັ່ງແມ່ນທົນ, 70 ປີແລ້ວ ແຂ້ວກໍຍັງຄືເກົ່າ.
- ໂມງໜ່ວຍນີ້ຈັ່ງແມ່ນທົນ 10 ປີແລ້ວກໍຍັງໃຊ້ໄດ້ດີ.

‘ທົນທານ’ ເປັນຄຳປະສົມປະເພດຄຳວິເສດ ປະກອບດ້ວຍຄຳວ່າ ‘ທົນ’ ໝາຍເຖິງ “ໝັ້ນຄົງ, ບໍ່ເພງ່າຍ” ແລະ ‘ທານ’ ໝາຍເຖິງ “ສູ້ຢັນໄວ້”.

ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ ‘ທົນທານ’ ກໍໝາຍເຖິງ “ໝັ້ນຄົງ, ບໍ່ສູນເສຍ ຫຼື ເພພັງງ່າຍ” ເຊັ່ນ

- ກະໂລ້ລາຍຫີນອ່ອນງາມ ແລະ ທົນທານດີ.
- ສິຊະນິດນີ້ທົນທານອີ່ຫຼີ ທາເກືອບ 10 ປີແລ້ວ ສີກໍຍັງບໍ່ຕົກ.
- ເພິ່ນໄດ້ສ້າງຕົວເມືອງໃໝ່ທີ່ມີບ່ອນພັກອາໄສທີ່ປອດໄພ, ທົນທານ ແລະ ຍືນຍົງ.



# ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ຖືກ | ຜິດ |
|---|---|
| ແນວຄິດສ້າງສັນ | ແນວຄິດສ້າງສັນ |
| ພົບປະສັງສັນ | ພົບປະສ້າງສັນ |
| ລັດຖະບານ | ລັດທະບານ |
| ພັດທະນາ | ພັດຖະນາ |
| ຫົວເໜົ່າ | ຫົວເນົ່າ |
| ເນົ່າເໜັນ | ເໜົ່າເໜັນ |
| ຜີເບິ່ງ | ພີ່ເບິ່ງ |
| ພີ່ນ້ອງ | ຜີ່ນ້ອງ |
| ໝາກຫຸ່ງ | ໝາກຮຸ່ງ |
| ຮຸ່ງເຮືອງ | ຫຸ່ງເຮືອງ |




# ວິທີເຮັດວຽກ

## ພາກທີ 6
## ວິທີນຳ

ຍ້ອນວ່າບໍ່ຊ່າງສາມັກຄີພວກຄົນທີ່ຫ້າວຫັນ, ບໍ່ຊ່າງຈັດຕັ້ງເຂົາເຈົ້າເປັນກຸ່ມແກ່ນສານນຳພາ ຫຼື ຍ້ອນວ່າບໍ່ຊ່າງເຮັດໃຫ້ແກ່ນສານນັ້ນໃກ້ຊິດຕິດແທດປະຊາຊົນ, ດັ່ງນັ້ນ ການນຳຈຶ່ງຫ່າງໄກປະຊາຊົນແລ້ວກໍເກີດມີພະຍາດອາດຍາ ຍ້ອນວ່າບໍ່ຊ່າງລວບລວມເອົາຄວາມເຫັນຂອງປະຊາຊົນ, ບໍ່ຊ່າງລວບລວມເອົາບົດຮຽນຂອງປະຊາຊົນ, ດັ່ງນັ້ນ ຄຳເຫັນຂອງຜູ້ນຳແບບນັ້ນ ຈຶ່ງເປັນແຕ່ທິດສະດີນ້ຳເຕົ້າເປົ່າ, ບໍ່ຖືກກັບຄວາມຈິງ.

ຍ້ອນວ່າບໍ່ຊ່າງປະສານນະໂຍບາຍລວມ ກັບຄວາມຈິງຂອງການນຳພາທົດລອງແຕ່ລະແຫ່ງ, ດັ່ງນັ້ນ ນະໂຍບາຍຈຶ່ງບໍ່ໄດ້ຮັບຜົນ ແລ້ວການນຳກໍກາຍເປັນແບບອາດຍາ, ເພາະສະນັ້ນ ໃນວຽກການປັບປຸງພັກກໍເຊັ່ນດຽວກັນກັບໃນວຽກງານອື່ນ, ຕ້ອງເດັດດ່ຽວປະຕິບັດແບບປະສານນຳກັບປະຊາຊົນ ແລະ ປະສານນະໂຍບາຍ ລວມກັບການທົດລອງແຕ່ລະແຫ່ງຕ້ອງໃຊ້ວິທີ “ເອົາອອກມາຈາກໝູ່ປະຊາຊົນ ແລ້ວເອົາກັບຄືນໄປໃນໝູ່ປະຊາຊົນ” ຕ້ອງລວບລວມເອົາຄຳເຫັນ ແລະ ບົດຮຽນໃນການນຳພາທົດລອງແຕ່ລະບ່ອນເຂົ້າມາເປັນຄຳເຫັນສ່ວນລວມ ແລ້ວນຳເອົາຄຳເຫັນລວມນັ້ນອອກໄປ ມາເປັນແຕ່ລະບ່ອນອີກ, ແລ້ວມາຖອດຖອນເອົາບົດຮຽນລວມອັນຕົວຈິງເຂົ້າມາເປັນຄຳສັ່ງໃໝ່, ເຮັດແນວນັ້ນໄປເລື້ອຍໆ. ຮູ້ຈັກເຮັດແນວນັ້ນ ຈຶ່ງແມ່ນຮູ້ເຮັດການນຳແທ້.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດ

# ຜັກບົ້ງ ກັບຄຸນປະໂຫຍດທີ່ຫຼາກຫຼາຍ

ໂດຍ: ທິວກະທີ



ຜັກບົ້ງເປັນຜັກຊະນິດໜຶ່ງທີ່ອຸດົມໄປດ້ວຍຄຸນປະໂຫຍດຫຼາກຫຼາຍ ທີ່ຊ່ວຍບຳລຸງຮ່າງກາຍ, ເສີມສຸຂະພາບປ້ອງກັນພະຍາດ ໄດ້ເປັນຢ່າງດີແລະຍັງເປັນຜັກທີ່ຫາຊື້ໄດ້ງ່າຍ, ລາຄາຖືກ ແລະ ຮັບປະທານງ່າຍອີກດ້ວຍ ເຊິ່ງມີຄຸນປະໂຫຍດຫຼາກຫຼາຍດັ່ງນີ້:

**1. ບຳລຸງສາຍຕາ:** ປະໂຫຍດທີ່ໂດດເດັ່ນຂອງຜັກບົ້ງ ແມ່ນຊ່ວຍບຳລຸງສາຍຕາ ໃນຜັກຊະນິດນີ້ອຸດົມໄປດ້ວຍແຄໂຣທີນອຍ, ວິຕາມິນເອ ແລະ ລູທີນ ເຊິ່ງເປັນວິຕາມິນ ແລະ ແຮ່ທາດທີ່ດີຕໍ່ສາຍຕາ ທັງຍັງຊ່ວຍເສີມສ້າງລະດັບກູຕາໄທໂອ ທີ່ຊ່ວຍປ້ອງກັນການເກີດພະຍາດຕາຕໍ້.

**2. ປິ່ນປົວອາການແໜ້ນທ້ອງ:** ຜັກບົ້ງນອກຈາກຈະມີວິຕາມິນແລ້ວຍັງມີໄຟເບີທີ່ສາມາດຊ່ວຍປິ່ນປົວສາອາການແໜ້ນທ້ອງໄດ້ ເຊິ່ງໄຟເບີຈະຊ່ວຍເຮັດໃຫ້ລະບົບຂັບຖ່າຍດີຂຶ້ນ. ນອກຈາກນີ້, ຜັກບົ້ງຍັງມີສັບພະຄຸນເປັນຢາລະບາຍ ອ່ອນໆ ແລະ ຍັງມີສ່ວນຊ່ວຍໃນການຫຼຸດຄໍເລສເຕີຣໍທີ່ເປັນສ່ວນປະກອບໃນການສ້າງໄຂມັນໄດ້ອີກດ້ວຍ.

**3. ບຳລຸງເລືອດ:** ຜັກບົ້ງເປັນຜັກທີ່ອຸດົມໄປດ້ວຍທາດເຫຼັກ ເຊິ່ງເປັນແຮ່ທາດສຳຄັນຕໍ່ລະບົບເລືອດ ສາມາດປ້ອງກັນພາວະເລືອດຈາງໄດ້.

**4. ບຳລຸງຕັບ:** ປະໂຫຍດອີກຢ່າງໜຶ່ງທີ່ຜັກບົ້ງມີກໍແມ່ນບຳລຸງຕັບ ເພາະໃນຜັກບົ້ງມີສານອາຫານຫຼາຍຢ່າງທີ່ຊ່ວຍໃນການລ້າງສານພິດໃນຮ່າງກາຍ ແລະ ຕ້ານອະນຸມູນອິດສະຫຼະທີ່ປ້ອງກັນເຊວບໍ່ໃຫ້ຖືກທຳລາຍ.

**5. ຫຼຸດອາການນອນບໍ່ຫຼັບ:** ໃຜທີ່ມີບັນຫານອນບໍ່ຫຼັບ ຫຼື ນອນຫຼັບຍາກ ການກິນຜັກບົ້ງຈຶ່ງສາມາດຊ່ວຍໄດ້ ເພາະຜັກບົ້ງນັ້ນອຸດົມໄປດ້ວຍສານເຊເລນຽມ ແລະສັງກະສີ ທີ່ມີສັບພະຄຸນຊ່ວຍຜ່ອນຄາຍປະສາດ ເຮັດໃຫ້ຮູ້ສຶກຜ່ອນຄາຍ ແລະ ນອນຫຼັບ ໄດ້ດີ.

**6. ປ້ອງກັນພະຍາດຫົວໃຈ:** ໃນຜັກບົ້ງມີສານຕ້ານອະນຸມູນອິດສະຫຼະເຊັ່ນ: ວິຕາມິນເອ, ວິຕາມິນຊີ ແລະ ສານເບຕ້າ-ແຄໂຣທີນ ເຊິ່ງຍັງຊ່ວຍປ້ອງກັນບໍ່ໃຫ້ຄໍເລສເຕີຣໍໄປລວມຕົວກັບອົກຊີແຊນ ໄປເກາະຕາມຫຼອດເລືອດທີ່ເປັນສາເຫດເຮັດໃຫ້ຫຼອດເລືອດອຸດຕັນ ຈົນເກີດຫົວໃຈວາຍ.

**7. ຕ້ານພະຍາດມະເຮັງ:** ຜັກບົ້ງເປັນແຫຼ່ງຂອງສານອາຫານຕ້ານອະນຸມູນອິດສະຫຼະຫຼາຍເຖິງ 13 ຊະນິດ ຈຶ່ງເຮັດໃຫ້ເປັນຜັກທີ່ສາມາດປ້ອງກັນພະຍາດມະເຮັງໄດ້ ໂດຍສະເພາະມະເຮັງລຳໄສ້, ມະເຮັງຊ່ອງທ້ອງລວມໄປເຖິງມະເຮັງຜິວໜັງ, ມະເຮັງເຕົ້ານົມ ເພາະໃນຜັກບົ້ງມີສານອາຫານຫຼາຍຢ່າງທີ່ໄປຊ່ວຍບໍ່ໃຫ້ເຊວໃນຮ່າງກາຍຖືກທຳລາຍນັ້ນເອງ.

## ວາດກະວີລາວ

# ຈາລຶກ ລັດຖະທຳມະນູນ

\# ເພັດນາລີ ກ້ອນພັນທະວົງ

✻ 33 ປີເອກອ້າງ
ເປັນຕຳນານກົດໝາຍ
ບົ່ງບອກລາວມີໃຊ້
ປະກາດໃຫ້ໂລກຮູ້

ບານເບັ່ງຜົນງານ
ຊ່າລືໄກກ້ອງ
ກົດໝາຍຂອງຊາດ
ລາວກ້າວພັດທະນາ

✻ 15 ສິງຫາຈາລຶກໄວ້
ວັນເດືອນປີວຽນໝູນ
1991 ປະກາດໃຊ້
ຫລາຍຊາດໄດ້ຮັບຮູ້

ວັນລັດຖະທຳມະນູນ
ຂອບຊາວເກົ້າປີໄດ້
ຝັງໃນປະຫວັດສາດ
ລາວໝັ້ນແກ່ນທະນົງ

✻ ລັດຖະທຳມະນູນບົ່ງບອກແຈ້ງ
ຄວາມຮຸ່ງເຮືອງສີວິໄລ
ຍ້ອນລາວມີກົດໝາຍໃຊ້
ສິດ-ພັນທະພົນລະເມືອງພຽບພ້ອມ

ເປັນແມ່ແບບການເມືອງ
ເສດຖະກິດ-ສັງຄົມກ້າວ
ເປັນມໍລະດົກສູງຄ່າ
ລາວໝັ້ນແກ່ນທະນົງ

✻ ຍ້ອນວ່າມີພັກຊີ້
ຊາວປະຊາມີສຸກ
ຍຸທ່າງປົວແປງສ້າງ
ປວງປະຊາພີ່ນ້ອງ

ເຍືອງສ່ອງນຳພາ
ເບີກບານຫົວຍິ້ມ
ຕາມແນວທາງໃສສ່ອງ
ລາວກ້າວໄຕ່ຕາມ

✻ ຂໍຈົດຈຳຍົກຍ້ອງ
ມີອາດລາໄລລືມ
ລາວມີລັດຖະທຳມະນູນໃຊ້
ເດີນດຸ່ງໄປສູ່ເບື້ອງ

ບຸນຄຸນພັກນຳພາ
ຂີດໝາຍຈະເລີນກ້າວ
ຈຶ່ງສົດໃສເຮືອງຮຸ່ງ
ຈະເລີນກ້າວຊອບພັດທະນາ ຊອບແລ້ວ!



## ລົມສາຍລະບາຍ



*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສ້ຽມທ້ຽນ

✻ **ຂໍ**ເປັນກຳລັງໃຈ ໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ທີ່ໄດ້ຮັບຜົນກະທົບຈາກເຫດການນ້ຳຖ້ວມຢູ່ຫຼາຍພື້ນທີ່ ພາໃຫ້ເກີດມີຄວາມເສຍຫາຍຫຼາຍສົມຄວນ ຈຶ່ງຂໍຊຽນຂ່າວຂໍ ຄວາມສົ່ງມາຫາ ພໍ່ແມ່ປວງປະຊາ ທົ່ວຫາບີແຄວນ ຂໍຈົ່ງອົດທົນສູ້ ກັບອຸປະສັກຍິ່ງໃຫຍ່ ຂໍໃຫ້ໄພຜ່ານພົ້ນ ລາວທຸກຄົນຊ່ວຍຊ້ວານ ໃຫ້ລາວພົ້ນຜ່ານໄພ **ທ່ານເອີຍ!**

✻ **ວັນ**ສື່ມວນຊົນແຫ່ງຊາດ **(13 ສິງຫາ 1950-13 ສິງຫາ 2024)** ໄດ້ໝູນວຽນບັນຈົບຄົບຮອບ 74 ປີ ແລະ **ວັນລັດຖະທຳມະນູນ** ແຫ່ງ ສປປ ລາວ ກ້າວມາຄົບຮອບ 33 ປີ (15 ສິງຫາ 1991-15 ສິງຫາ 2024) ຕາມຍິນຂ່າວ ຫຼາຍພາກສ່ວນເອົາໃຈໃສ່ສ້າງຜົນງານປະກອບສ່ວນ ບາງຜ່ອງຈັດປາຖະກະຖາ ເພື່ອໂຄສະນາ **2 ວັນ**ດັ່ງກ່າວ ບາງຜ່ອງອອກແຮງງານລະນຶກຫລາຍຢ່າງ ເພື່ອໃຫ້ປະຊາຊົນລາວບັນດາເຜົ່າຮັບຮູ້ ແລະ ເຂົ້າໃຈກັບຢ່າງທົ່ວເຖິງ **ຊົມເຊີຍ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ຊື້ເອງ

ຕ່າຫຼວດຈັບໂຈນຊື້ລັກໄດ້ ກຳລັງພາກັບໄປຂັງຄຸກ ແຕ່ພໍດີຕ່າຫຼວດຢາກສູບຢາ ໂຈນຈຶ່ງເວົ້າວ່າ: ຂ້ອຍຊິໄປຊື້ໃຫ້

**ຕ່າຫຼວດ:** ມຶງຄິດວ່າກູໂງ່ຫວະ ຖ້າໃຫ້ມຶງໄປຊື້ ມຶງກະລັກໜີຊົບຕອນ ມຶງຖ້າຢູ່ນີ້ແຫຼະ ກູຊິໄປຊື້ເອງ

!!!!!!!!!!!!



## ຄະຕິເຕືອນໃຈ

\#ດອກຫຍ້າ

ເຮັດກິນຢ່າຄ້ານ ເຂົ້າບ້ານຢ່າອາຍ
ເຫັນຄົນຕາຍ ຢ່າຊີ້ດຽດ



ລັດຖະສະພາຕ່າງປະເທດ

# ຣູມານີ ກຳນົດວັນເລືອກຕັ້ງ ປະທານາທິບໍດີ ແລະ ສະພາຕ່ຳ



ລັດຖະບານຣູມານີ ໄດ້ກຳນົດປະຕິທິນການເລືອກຕັ້ງປະທານາທິບໍດີ ແລະ ສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ທີ່ຈະຈັດຂຶ້ນໃນໄວໆນີ້ ຢ່າງເປັນທາງການແລ້ວ; ໂຄສົກລັດຖະບານ ທ່ານ ມິຮາຍ ຄອນສ໌ແຕນຕິນ (Mihai Constantine) ກ່າວວ່າ ການຕັດສິນໃຈດັ່ງກ່າວໄດ້ຮັບການອະນຸມັດໃນກອງປະຊຸມເມື່ອວັນພະຫັດທີ 04 ກໍລະກົດຜ່ານມາ.

ການເລືອກຕັ້ງປະທານາທິບໍດີຮອບທຳອິດ ຈະຈັດຂຶ້ນໃນວັນທີ 24 ພະຈິກ, ຮອບທີ 2 ວັນທີ 08 ທັນວາ; ສ່ວນການເລືອກຕັ້ງສະພາຜູ້ແທນປະຊາຊົນ ຈະຈັດຂຶ້ນໃນວັນທີ 01 ທັນວານີ້ ເຊິ່ງກົງກັບວັນພັກແຫ່ງຊາດຂອງຣູມານີ.

**ແຫຼ່ງຂ່າວ: ຊິນຮວາ**

# ຄະນະກຳມະການເລືອກຕັ້ງ Rwanda ຢືນຢັນ Kagame ໄດ້ຮັບເລືອກຕັ້ງຄືນ




ທ່ານ ພອນ ຄາກາເມ (Paul Kagame) ປະທານາທິບໍດີຄົນປັດຈຸບັນ ຈາກພັກແນວໂຮມຮັກຊາດຣະວັນດາ (Rwanda Patriotic Front-RPF) ຊະນະການເລືອກຕັ້ງປະທານາທິບໍດີ ດ້ວຍຄະແນນສຽງຮ້ອຍລະ 99.18, ອີງຕາມຜົນການເລືອກຕັ້ງທີ່ເປີດເຜີຍເມື່ອວັນຈັນທີ 22 ກໍລະກົດຜ່ານມາ ໂດຍຄະນະກຳມະການການເລືອກຕັ້ງແຫ່ງຊາດ.

ຜົນການເລືອກຕັ້ງສະແດງໃຫ້ເຫັນວ່າ ພັກ RPF ໄດ້ຮັບ 37 ຈາກ 53 ທີ່ນັ່ງ ໃນສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ຂອງລັດຖະສະພາ ເຊິ່ງເປັນຕົວແທນຂອງພັກການເມືອງ ແລະ ຜູ້ສະໝັກເອກະລາດ; ພັກເສລີນິຍົມ ພັກຝ່າຍຄ້ານ ນຳໂດຍປະທານສະພາຄົນປັດຈຸບັນ ທ່ານ ໂດນາຕີເຢ ມູຄາບາລິຊາ (Donatille Mukabalisa) ແລະ ພັກສັງ ຄົມປະຊາທິປະໄຕ ນຳໂດຍອະດີດລັດຖະມົນຕີກະຊວງການຕ່າງປະເທດທ່ານວິນເຊນຕ໌ບີຣູຕາ (Vincent Biruta) ໄດ້ຮັບພັກລະ 5 ທີ່ນັ່ງ; ພັກປະຊາທິປະໄຕສີຂຽວແຫ່ງຣະວັນດາ, ພັກປະຊາທິປະໄຕໃນອຸດົມຄະຕິ (Ideal Democratic Party) ແລະ ພັກສັງຄົມ ໄດ້ຮັບພັກລະ 2 ທີ່ນັ່ງ.

ຜູ້ມີສິດເລືອກຕັ້ງປະມານ 9 ລ້ານຄົນ ໄດ້ເຂົ້າຮ່ວມການເລືອກຕັ້ງທີ່ຈັດຂຶ້ນໃນວັນທີ 15 ກໍລະກົດ 2024 ໂດຍມີຜູ້ສະໝັກຮັບເລືອກຕັ້ງທັງໝົດ589 ຄົນ ລົງແຂ່ງຂັນເອົາ 80 ທີ່ນັ່ງ ໃນສະພາຕ່ຳ; ນອກຈາກຜູ້ແທນຈາກບັນດາພັກການເມືອງ, ຍັງມີສະມາຊິກສະພາຄົນອື່ນໆ (27 ທີ່ນັ່ງ ເລືອກຕັ້ງໂດຍທາງອ້ອມ) ມາຈາກກຸ່ມພິເສດ (ຊາວໜຸ່ມ, ແມ່ຍິງ ແລະ ຄົນພິການ).

ທ່ານຄາກາເມອາຍຸ66 ປີ ຂຶ້ນກຳອຳນາດໃນປີ 2000. ທ່ານໄດ້ຮັບການຍົກຍ້ອງວ່າເປັນຜູ້ນຳພາໃນສົງຄາມປົດປ່ອຍປະເທດ ໂດຍກອງທັບຮັກຊາດຣະວັນດາໃນເວລານັ້ນເຊິ່ງເປັນກອງກຳລັງຂອງRPFທີ່ສາມາດຢຸດຕິການຂ້າລ້າງເຜົ່າພັນເປັນເວລາ 100 ວັນ ເມື່ອປີ 1994 ຕໍ່ຊາວທຸດຊີ (Tutsi) ເຊິ່ງເປັນກຸ່ມຊົນເຜົ່າໃນພາກພື້ນທະເລສາບໃຫຍ່ອາຟຣິກາ (African Great Lakes) ໄດ້ສຳເລັດ, ໂດຍໄດ້ສົ່ງເສີມຄວາມສາມັກຄີ ແລະ ການຟື້ນຟູສັນຕິພາບໃນປະເທດ; ມີຜູ້ເສຍຊີວິດຍ້ອນການສັງຫານໝູ່ດັ່ງກ່າວປະມານ 1 ລ້ານຄົນ.

ທ່ານ ຄາກາເມ ຊະນະການເລືອກຕັ້ງໃນປີ2017 ເປັນສະໄໝທີ 3 ດ້ວຍຄະແນນສຽງຫຼາຍກວ່າ 98 ເປີເຊັນ.

**ແຫຼ່ງຂ່າວ: ຊິນຮວາ**

# ກົດໝາຍທີ່ດິນຂອງຫວຽດນາມ ຄາດວ່າຈະເພີ່ມໂອກາດການລົງທຶນ



*ຄະນະຊ່ຽວຊານລາຍງານວ່າ ກົດໝາຍວ່າດ້ວຍທີ່ດິນຂອງຫວຽດນາມ (ສະບັບປັບປຸງປີ 2024) ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາໃນຕົ້ນປີນີ້ ແລະ ມີຜົນບັງຄັບໃຊ້ໃນວັນທີ 01 ສິງຫາ 2024, ຈະຊ່ວຍສ້າງໂອກາດການລົງທຶນ ໃຫ້ແກ່ຂະແໜງອຸດສາຫະກຳທີ່ກ່ຽວຂ້ອງ.*

ສຳນັກຂ່າວຊິນຮວາລາຍງານຈາກນະຄອນຫຼວງຮ່າໂນ້ຍ, ປະເທດຫວຽດນາມ ເມື່ອວັນທີ 20 ກໍລະກົດຜ່ານມາວ່າ, ຂໍ້ມູນຂອງສູນການຕັດສິນລະຫວ່າງປະເທດຫວຽດນາມ (Vietnam International Arbitration Center-VIAC) ໃຫ້ຮູ້ວ່າ: ເມື່ອກົດໝາຍດັ່ງກ່າວມີຜົນສັກສິດ ຈະເປັນບ່ອນອີງໃຫ້ແກ່ການປ່ຽນແປງສະພາບການລົງທຶນດຳເນີນທຸລະກິດ ບໍ່ພຽງບັນດາຂະແໜງການທີ່ກ່ຽວຂ້ອງເຊັ່ນອະສັງຫາລິມະຊັບເທົ່ານັ້ນ, ແຕ່ຍັງມີອຸດສາຫະກຳອື່ນໆເຊັ່ນ: ການເງິນ, ການກໍ່ສ້າງ ແລະ ການບໍລິການ.

ບົດລາຍງານຂອງກຳມາທິການເສດຖະກິດ, ສະພາແຫ່ງຊາດລະບຸວ່າ, ລະບຽບການໃໝ່ທີ່ອະນຸຍາດໃຫ້ຊາວຫວຽດນາມທີ່ອາໄສຢູ່ຕ່າງປະເທດ ເປັນເຈົ້າຂອງເຮືອນຢູ່ ແລະ ມີສິດນຳໃຊ້ທີ່ດິນ ຈະຊຸກຍູ້ໃຫ້ກຸ່ມຄົນເຫຼົ່ານີ້ມີສ່ວນຮ່ວມກັບກິດຈະກຳການລົງທຶນໄລຍະຍາວຂອງປະເທດ.

ໃນເຂດພື້ນທີ່ຂອງອະສັງຫາລິມະຊັບອຸດສາຫະກຳ, ຄະນະຊ່ຽວຊານເຫັນວ່າ ກົດໝາຍດັ່ງກ່າວຈະສະໜອງທາງເລືອກເພີ່ມຕື່ມໃຫ້ແກ່ກຸ່ມນັກລົງທຶນ ເຊິ່ງສາມາດເຊົ່າທີ່ດິນໂດຍຈ່າຍຄ່າທຳນຽມການນຳໃຊ້ທີ່ດິນຕໍ່ປີ ຫຼື ຄັ້ງດຽວ ຂຶ້ນກັບຄວາມຕ້ອງການຂອງທຸລະກິດ.

# ລັດຖະສະພາແຟງລັງ ອະນຸມັດຮ່າງກົດໝາຍ "ຊຸກຍູ້ກັບຄືນ" ຊາຍແດນ



ວັນສຸກທີ 12 ກໍລະກົດຜ່ານມາ, ລັດຖະສະພາແຟງລັງ ໄດ້ຮັບຮອງເອົາຮ່າງກົດໝາຍສະບັບໃໝ່ເຊິ່ງເຮັດໃຫ້ເຈົ້າໜ້າທີ່ຮັກສາຊາຍແດນຂອງແຟງລັງ ມີອຳນາດໃນການປະຕິເສດບໍ່ໃຫ້ຜູ້ຂ້າມຊາຍແດນເຂົ້າມາໃນກໍລະນີທີ່ມີຜູ້ຂໍລີ້ໄພເຂົ້າມາເປັນຈຳນວນຫຼວງຫຼາຍ.

ຮ່າງກົດໝາຍ "ຊຸກຍູ້ກັບຄືນ" ຊາຍແດນ ("push back" bill) ໄດ້ຮັບການຮັບຮອງເອົາດ້ວຍຄະແນນເຫັນດີ 167 ສຽງ, ຄັດຄ້ານ 31 ສຽງ ແລະ ງົດອອກສຽງ 1 ສຽງ; ເນື່ອງຈາກຮ່າງກົດໝາຍສະບັບນີ້ ລະເມີດຫຼັກການລັດຖະທຳມະນູນຂອງແຟງລັງ ແລະ ພັນທະສາກົນ, ການຮັບຮອງເອົາຮ່າງກົດໝາຍດັ່ງກ່າວໃນລັດຖະສະພາ (200 ທີ່ນັ່ງ) ຈຶ່ງຕ້ອງໄດ້ຮັບສຽງສ່ວນຫຼາຍ 5 ສ່ວນ 6.

ການລົງຄະແນນສຽງໃນລັດຖະສະພາມີຂຶ້ນຫຼັງຈາກມີການໂຕ້ວາທີທາງການເມືອງຢ່າງຮຸນແຮງ ແລະ ຄວາມວິຕົກກັງວົນພາຍໃນພູມມີທັດດ້ານການເມືອງ (political landscape). ໃນບັນດາພັກຮ່ວມລັດຖະບານ, ພັກອະນຸລັກນິຍົມ, ພັກແຟງລັງ ແລະ ພັກປະຊາທິປະໄຕຄຣິສຕຽນ (ພັກຂະໜາດນ້ອຍ) ສະໜັບສະໜູນຮ່າງກົດໝາຍດັ່ງກ່າວ, ຂະນະທີ່ພັກປະຊາຊົນຊູແອັດ ແຕກແຍກກັນ; ໃນກຸ່ມຝ່າຍຄ້ານ, ພັກສູນກາງ ສະໜັບສະໜູນຮ່າງກົດໝາຍ, ໃນຂະນະທີ່ພັກສີຂຽວ ແລະ ພັນທະມິດຝ່າຍຊ້າຍ ຄັດຄ້ານ, ແລະ ພັກສັງຄົມປະຊາທິປະໄຕ ກໍແຕກແຍກກັນເຊັ່ນກັນ.

ບັນດາຜູ້ສະໜັບສະໜູນຮ່າງກົດໝາຍດັ່ງກ່າວຍອມຮັບວ່າ ຮ່າງກົດໝາຍບໍ່ສອດຄ່ອງກັບຫຼັກການພື້ນຖານຂອງລັດຖະທຳມະນູນ, ແຕ່ຢືນຢັນວ່າກົດໝາຍສະບັບນີ້ ມີຄວາມຈຳເປັນເພື່ອແກ້ໄຂບັນຫາດ້ານຄວາມໝັ້ນຄົງແຫ່ງຊາດທີ່ອາດເກີດຂຶ້ນ; ແນວໃດກໍດີ, ບັນດາຝ່າຍຄັດຄ້ານກ່າວເຕືອນວ່າ ການຖອນຕົວຊົ່ວຄາວອອກຈາກກົດໝາຍຂອງແຟງລັງ ແລະ ສະຫະພາບເອີຣົບ ສາມາດສ້າງແບບຢ່າງ ແລະ ຈະທຳລາຍຫຼັກນິຕິທຳໃນແຟງລັງໄດ້, ພວກເຂົາໂຕ້ຖຽງວ່າ ຍັງມີທາງເລືອກອື່ນໆ ເພື່ອປົກປ້ອງຄວາມໝັ້ນຄົງຂອງປະເທດ.

ຊາຍແດນລະຫວ່າງແຟງລັງ ແລະ ຣັດເຊຍ ໄດ້ຖືກປິດຕັ້ງແຕ່ທ້າຍປີຜ່ານມາ, ຍົກເວັ້ນເສັ້ນທາງລົດໄຟຂົນສົ່ງສິນຄ້າ.

**ແຫຼ່ງຂ່າວ: ຊິນຮວາ**

ເບິ່ງໄວ້ ໄດ້ບົດຮຽນ

# ຫຼຸດຜ່ອນຄວາມທຸກຍາກ ດ້ວຍນະໂຍບາຍສະເພາະ

❖ ວິເສດ ສະແຫວງສຶກສາ

ຄໍລຳ "ເບິ່ງໄວ້ໄດ້ບົດຮຽນ" ປະຈຳອາທິດນີ້ ຂໍນຳທ່ານໄປຮູ້ຈັກກັບນະໂຍບາຍຫຼຸດຜ່ອນ ກ້າວໄປເຖິງບ່ອນລຶບລ້າງຄວາມທຸກຍາກໃນບາງປະເທດດັ່ງຕໍ່ໄປນີ້:

ທີ່**ອິນໂດເນເຊຍ**ເລີ່ມແຕ່ຕົ້ນປີ2019, ທ່ານ ໂຢໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ໄດ້ເປີດເຜີຍໃຫ້ຮູ້ກ່ຽວກັບນະໂຍບາຍຫຼຸດຜ່ອນຄວາມທຸກຍາກ ໂດຍເນັ້ນການສະໜອງເຮືອນຢູ່ໃຫ້ຄົນໃນໄວໜຸ່ມທີ່ທຸກຍາກ. ການມີເຮືອນຢູ່ເປັນຫຼັກແຫຼ່ງນັ້ນ ຈະຊ່ວຍໃຫ້ຊາວໜຸ່ມຕັ້ງໂຕໄດ້ໃນເບື້ອງຕົ້ນ. ນະໂຍບາຍດັ່ງກ່າວ ຈະຊ່ວຍໃຫ້ຊາວໜຸ່ມສາມາດຊື້ເຮືອນຢູ່ໃນລາຄາຖືກໆ ດ້ວຍຮູບການຜ່ອນຈ່າຍໃນອັດຕາດອກເບ້ຍຕໍ່າ. ຄົນໜຸ່ມທີ່ຈະໄດ້ຮັບນະໂຍບາຍດັ່ງກ່າວ ແມ່ນຜູ້ທີ່ເກີດໃນໄລຍະລະຫວ່າງແຕ່ປີ 1980 ຫາປີ 2000. ໝາຍຄວາມວ່າ ຄົນທີ່ເກີດໃນໄລຍະດັ່ງກ່າວ ຈະມີອາຍຸລະຫວ່າງ 20-40 ປີ ໃນປີ 2019 ກ້ອນເງິນທີ່ທາງການອິນໂດເນເຊຍ ນຳໃຊ້ເພື່ອປຸກເຮືອນລາຄາຖືກໃຫ້ຊາວໜຸ່ມຊື້ນັ້ນ ແມ່ນມາຈາກງົບປະມານຂອງລັດ. ຂ່າວບອກວ່ານະໂຍບາຍສະໜອງເຮືອນຢູ່ໃຫ້ທົ່ວສັງຄົມ ໃນອິນໂດເນເຊຍນັ້ນ ໄດ້ເລີ່ມມາກ່ອນໜ້ານັ້ນແລ້ວ ໂດຍສະຖິຕິໄດ້ຊີ້ບອກວ່າ ໃນປີ 2014 ນັ້ນ ຈຳນວນເຮືອນທີ່ປຸກສ້າງພາຍໃຕ້ນະໂຍບາຍນີ້ ມີທັງໝົດປະມານ 1 ລ້ານຫົວໜ່ວຍ. ສ່ວນນະໂຍບາຍເຮືອນລາຄາຖືກສຳລັບຄົນໜຸ່ມນັ້ນ ແມ່ນສ່ວນໜຶ່ງທີ່ນອນຢູ່ໃນນະໂຍບາຍຫຼຸດຜ່ອນຄວາມທຸກຍາກລວມ.

ທີ່ **ສປ ຈີນ** ທາງການຈີນໄດ້ດຳເນີນນະໂຍບາຍລຶບລ້າງຄວາມທຸກຍາກແບບກວມລວມ ແລະ ແບບສະເພາະ ເຊິ່ງໄດ້ຮັບຜົນສຳເລັດເປັນກ້າວໆມາ. ແຜນລຶບລ້າງຄວາມທຸກຍາກແບບສະເພາະນັ້ນ ແມ່ນເພື່ອຊ່ວຍເຫຼືອກຸ່ມຄົນພິການ, ກຸ່ມຄົນປ່ຽວພອຍດ້ອຍໂອກາດ ກໍຄືຊາວຊົນນະບົດທີ່ປະກອບອາຊີບດ້ວຍການລ້ຽງສັດຢູ່ຕາມເຂດພູດອຍ ແລະ ເຂດທະເລຊາຍ ຕົວຢ່າງທີ່ໂດດເດັ່ນກໍຄື ການຊ່ວຍເຫຼືອຄອບຄົວທຸກຍາກຢູ່ເຂດພູດອຍ ແລະ ເຂດທະເລຊາຍ ຢູ່ ຊິນຈຽງ ທີ່ເປັນເຂດປົກຄອງຕົນເອງ. ຂ່າວບອກວ່າ ທາງການຈີນໄດ້ຊ່ວຍຍົກຍ້າຍຄອບຄົວທຸກຍາກເຫຼົ່ານີ້ລົງໄປຕັ້ງຖິ່ນຖານໃໝ່ຢູ່ເຂດທົ່ງພຽງ ເພື່ອສ້າງເງື່ອນໄຂສະດວກບໍ່ພຽງແຕ່ໃນການລ້ຽງສັດ ແຕ່ຍັງມີລາຍໄດ້ຈາກການປູກຝັງຕື່ມ. ພາຍໃນປີ 2019 ຈຳນວນເຮືອນທີ່ທາງການຈີນປຸກສ້າງໃຫ້ຄອບຄົວທຸກຍາກເຫຼົ່ານີ້ມີທັງໝົດ140,000 ຫົວໜ່ວຍ. ຕໍ່ມາໃນປີ 2020 ຈຳນວນຜູ້ທຸກຍາກ ຈຳນວນ 21,000 ຄົນ ທີ່ຍັງເຫຼືອຢູ່ຖິ່ນເດີມ ກໍໄດ້ຖືກຍົກຍ້າຍລົງສູ່ເຂດທົ່ງພຽງເປັນທີ່ຮຽບຮ້ອຍ.

ທີ່ **ມຽນມາ,** ນະໂຍບາຍຊີຫຼຸດຜ່ອນຄວາມທຸກຍາກຢູ່ມຽນມານັ້ນ ສ່ວນໜຶ່ງແມ່ນເນັ້ນການສະໜອງທີ່ຢູ່ອາໄສໃຫ້ຄອບຄົວທີ່ທຸກຍາກຄ້າຍໆກັບຢູ່ອິນໂດເນເຊຍ. ໂຄງການປຸກສ້າງເຮືອນລາຄາຖືກເລີ່ມຂຶ້ນໃນປີ 2018 ຢູ່ນະຄອນຢ້າງກຸ້ງ ໂດຍໄດ້ສ້າງສຳເລັດຈຳນວນ 860 ຫົວໜ່ວຍ. ເນື່ອງຈາກວ່າຈຳນວນເຮືອນທີ່ມີໃນເບື້ອງຕົ້ນນັ້ນບໍ່ພຽງພໍສຳລັບຈຳນວນຄອບຄົວທີ່ຕ້ອງການ; ດັ່ງນັ້ນ, ຈຶ່ງຈັດໃຫ້ມີການຊື້ດ້ວຍການຈົກສະຫຼາກ ໂດຍມີການແບ່ງໂກຕາດັ່ງນີ້: 35% ຂອງຈຳນວນເຮືອນຈັດຂາຍໃຫ້ປະຊາຊົນທົ່ວໄປ, 25% ສຳລັບຄອບຄົວພະນັກງານຕາມບໍລິສັດຕ່າງໆ, 15% ສຳລັບຂາຍໃຫ້ພະນັກງານບຳນານ, ສ່ວນເຫຼືອນັ້ນໄດ້ຈັດໄວ້ສຳລັບຂາຍໃຫ້ຄອບຄົວທີ່ຈຳເປັນອື່ນໆ. ສ່ວນລາຄາເຮືອນນັ້ນໄດ້ຈັດໄວ້ເປັນ 2 ລະດັບຕາມລາຍຮັບຂອງຄອບຄົວທີ່ຈຳເປັນເຫຼົ່ານັ້ນ.

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ
ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ:
laocon@nalao.la




# ຊາຍໃຈຊື່

*#ບ່າວກະບື*

ໄດ້ສາມປີແລ້ວ ທີ່ຊຽງຄຳໄປປະຈຳການຢູ່ຕ່າງແດນ. ໃນຊ່ວງເວລາດັ່ງກ່າວ, ເຂົາສາມາດຕິດຕໍ່ພົວພັນກັບເມຍເຂົາໂດຍຜ່ານຈົດໝາຍເທົ່ານັ້ນ. ຢູ່ມາມື້ໜຶ່ງ ເຂົາໄດ້ຮັບ ຈ.ມ ຈາກນາງເມຍ ມີຂໍ້ຄວາມວ່າ: "ຂ່າວດີ !... ນ້ອງກຳລັງຖືພາລູກຜູ້ທີສອງຂອງພວກເຮົາ !"

ຊຽງຄຳ ຮູ້ສຶກປຶ້ມລົ້ນໄປດ້ວຍຄວາມດີໃຈ. ເຂົາຟ້າວໄປປ່າວຂ່າວດີນີ້ໃຫ້ໝູ່ພວກຊາບ ພ້ອມທັງແຈກເບຍປ໋ອງນຳ.

ທ່ານເຈິງ, ເພື່ອນຄົນສະໜິດທີ່ສຸດຂອງຊຽງຄຳ ດຶງເຂົາໄປລົມຢູ່ຂ້າງໆ. ເຂົາເວົ້າວ່າ: "ໂຕຄຶດຄັກແລ້ວບໍ່ ກ່ຽວກັບເດັກຜູ້ທີສອງນີ້. ນັບແຕ່ໂຕເມືອຍາມບ້ານ ຮອດດຽວນີ້ມັນກາຍມາສອງປີພໍແຮງແລ້ວ, ແລ້ວໂຕຊິເປັນພໍ່ຂອງເດັກໄດ້ແນວໃດ?"

ຊຽງຄຳຕອບວ່າ: "ອັນນັ້ນບໍ່ເຫັນເປັນເລື່ອງແປກດອກ. ເບິ່ງເຮົາກັບບັກນ້ອງຊາຍເຮົາຊີ້ແຕ້ມຫັ້ນກໍໄດ້. ພວກເຮົາເກີດຫ່າງກັນກວ່າຫ້າປີພຸ້ນ."

# Simple Man

*#BAOKBU*

Since the last three years, Xieng Kham had been posted abroad. During this time he could communicate with his wife only through letters.

One day, he received a letter form his wife that stated "... Good news I'm pregnant with our second baby."

Xieng Kham was overwhelmed with joy. He hurried to sreak the mews to his colleagues and distributed canned beer.

Mr Cheung, Xieng Kham's best friend, took him to one side and side, "Have? It's been two years since you've been home. Then how come you've become a again?"

Xieng Kham said: "Nothing strange in that. There's a gap of more than five years between me and my younger brothe Taem".

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຮຽງເນື້ອໃນກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ທີ່ຫ້ອງປະຊຸມສະໂມສອນໄຟຟ້າເມືອງແກ້ວອຸດົມ ແຂວງວຽງຈັນ, ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ມີທ່ານພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ພົຕ. ສົມວັນ ສາຍລ້ອງພານ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ບັນດາທ່ານຮອງປະທານກຳມາທິການພາຍໃນ ສພຊ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານພົທ. ສຸວອນເລືອງບຸນມີໄດ້ມີຄຳເຫັນກ່າວໄຂກອງປະຊຸມຢ່າງເປັນທາງການເຊິ່ງມີເນື້ອໃນບາງຕອນວ່າ: "ພວກເຮົາຈະພ້ອມກັນຄົ້ນຄວ້າແລະຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການສະກັດກັ້ນແລະຕ້ານອັກຄີໄພ (ສະບັບ ປັບປຸງ) ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນບ່າຍຂອງວັນທີ 25 ມິຖຸນາ 2024 ຈຳນວນ 10 ທ່ານ ກວມເອົາ 36 ມາດຕາ 68 ເນື້ອໃນ ເຊິ່ງຄະນະຮັບຜິດຊອບກໍໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ ປັບປຸງ 17 ມາດຕາ 34 ເນື້ອໃນ ແລະ ຮັກສາໄວ້ 19 ມາດຕາ 34 ເນື້ອໃນ."

ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ດຳເນີນເປັນເວລາ 2 ວັນ ເຊິ່ງບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າຄືນບັນດາຄຳເຫັນຂອງ ສສຊ ທີ່ເຫັນວ່າມີເຫດມີຜົນ ເພື່ອປັບປຸງໃສ່ກົດໝາຍ; ນອກຈາກນັ້ນ, ຍັງໄດ້ເບິ່ງຄືນເນື້ອໃນແຕ່ລະມາດຕາຢ່າງລະອຽດ ແນໃສ່ເຮັດໃຫ້ກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**(ບຸນເກີດ ວົງໄຊຍາ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກົກ ບຸດດາໄຊ